(ii) **ຄົວເຮືອນທີ່ເຮັດກະສິກຳທີ່ມີປະສິດທິຜົນໃນການຜະລິດຕ່ຳແຕ່ສາມາດສ້າງຜົນຜະລິດທີ່ເກີນດຸນ, ມີການສຶກສາໃນລະດັບຕ່ຳຫາກາງ ແຕ່ຍັງບໍ່ທັນພຽງພໍໃນການເຮັດວຽກຢູ່ໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້ເທື່ອ.** ແຕ່ເຖິງວ່າກຸ່ມນີ້ຈະມີທີ່ດິນກວ້າງກວ່າກຸ່ມກ່ອນໜ້ານີ້, ເຂົາເຈົ້າຍັງທຸກຍາກຍ້ອນຄວາມສາມາດໃນການຜະລິດຕ່ຳ. ສະນັ້ນ, ນະໂຍບາຍທີ່ຊ່ວຍສ້າງກຳໄລໃຫ້ແກ່ຜົນຜະລິດກະສິກຳຂອງຄົວເຮືອນເຫຼົ່ານີ້ຈະເປັນປະໂຫຍດຫຼາຍທີ່ສຸດ, ເປັນຕົ້ນການສົ່ງເສີມການເຊື່ອມໂຍງເຂົ້າໃນໂສ້ການຜະລິດ ແລະ ການຫຼຸດຜ່ອນຕົ້ນທຶນການຜະລິດ. ພ້ອມນັ້ນ, ການເພີ່ມອັດຕາການເຂົ້າຮຽນກໍ່ຈະຊ່ວຍເຮັດໃຫ້ຄົວເຮືອນເຫຼົ່ານີ້ສາມາດເຮັດວຽກຢູ່ໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້.

(iii) **ຄົວເຮືອນທີ່ເຮັດວຽກຂັ້ນຕ່ຳຢູ່ໃນຂະແໜງທີ່ບໍ່ແມ່ນກະສິກຳທີ່ບໍ່ເປັນທາງການ, ເຊິ່ງປົກກະຕິແລ້ວແມ່ນອາໄສຢູ່ໃນເຂດຕົວເມືອງ ແລະ ມີລະດັບການສຶກສາປານກາງ.** ບັນຫາຕົ້ນຕໍຂອງຄົວເຮືອນເຫຼົ່ານີ້ ແມ່ນການທີ່ເຂົາເຈົ້າເຮັດວຽກຂັ້ນຕ່ຳໃນຂະແໜງທີ່ບໍ່ແມ່ນກະສິກຳ. ເນື່ອງຈາກຄົວເຮືອນເຫຼົ່ານີ້ມີລະດັບການສຶກສາປານກາງ, ການມີນະໂຍບາຍຊຸກຍູ້ການສ້າງວຽກເຮັດງານທຳຢູ່ໃນຂະແໜງອຸດສາຫະກຳປຸງແຕ່ງ ແລະ ການບໍລິການຈະເປັນປະໂຫຍດສຳລັບເຂົາເຈົ້າ ພ້ອມທັງຊ່ວຍເຮັດໃຫ້ເຂົາເຈົ້າສາມາດໄດ້ວຽກທີ່ມີປະສິດທິຜົນຢູ່ໃນຂະແໜງທີ່ບໍ່ແມ່ນກະສິກຳອີກດ້ວຍ.

(iv) **ຄົວເຮືອນທີ່ພົບກັບບັນຫາທາງດ້ານສຸຂະພາບໃນໄລຍະຜ່ານມາ.** ການປັບປຸງລະບົບການປະກັນສຸຂະພາບແຫ່ງຊາດໃຫ້ແກ່ຄົວເຮືອນທີ່ຢູ່ເຂດຊົນນະບົດ ແລະ ຄົວເຮືອນທີ່ເຮັດວຽກຢູ່ໃນຂະແໜງທີ່ບໍ່ເປັນທາງການ, ໂດຍສະເພາະແມ່ນຜູ້ທີ່ບໍ່ ໄດ້ຮັບການຄຸ້ມຄອງທາງດ້ານປະກັນສຸຂະພາບຈາກນາຍຈ້າງ, ຈະຊ່ວຍປ້ອງກັນບໍ່ໃຫ້ຄົວເຮືອນທຸກຍາກ ແລະ ຊ່ວຍຫຼຸດຜ່ອນຄວາມສ່ຽງໃຫ້ເຂົາເຈົ້າ.

ຢ່າງໃດກໍ່ຕາມ, ບາງນະໂຍບາຍກໍ່ອາດຈະເປັນປະໂຫຍດໃຫ້ແກ່ທັງໝົດທຸກກຸ່ມຄົນທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກ. ໂດຍລວມແລ້ວ ການເພີ່ມຄວາມເຂັ້ມແຂງໃຫ້ແກ່ຕາໜ່າງການປະກັນສັງຄົມ ຈະເປັນປະໂຫຍດໃຫ້ໝົດທຸກກຸ່ມ ໂດຍສະເພາະບັນຫາທີ່ກ່ຽວພັນກັບເສດຖະກິດ, ການປ່ຽນແປງດິນຟ້າອາກາດ ແລະ ສຸຂະພາບ. ເຊັ່ນກັນ, ນະໂຍບາຍປັບປຸງແວດລ້ອມທຸລະກິດກໍ່ເປັນປະໂຫຍດສຳລັບທຸກກຸ່ມ ເພາະວ່ານະໂຍບາຍດັ່ງກ່າວຈະຊ່ວຍກະຕຸ້ນການສ້າງອາຊີບທີ່ດີກວ່າເກົ່າໃຫ້ແກ່ປະຊາກອນຈຳນວນຫຼວງຫຼາຍ.

I ພາກສະເໜີ: ຈຸດພິເສດຂອງຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກໃນ ສປປ ລາວ

1. ຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກ ໃນ ສປປ ລາວ ມັກຈະມີເຄື່ອງມືການຜະລິດຂັ້ນຕ່ຳ ແລະ ມີອັດຕາການເຂົ້າຮຽນຕ່ຳ, ເຊິ່ງສ່ວນໃຫຍ່ແລ້ວຈະເຮັດວຽກໃນຂະແໜງທີ່ມີປະສິດທິພາບໃນການຜະລິດຕ່ຳ ແລະ ມີຄວາມສ່ຽງສູງຕໍ່ຜົນກະທົບທີ່ອາດເກີດຂຶ້ນກະທັນຫັນ. ໃນສົກປີ 2012/13, ຜູ້ທີ່ມີອາຍຸໃນເກນເຮັດວຽກ (15-64 ປີ) ຢູ່ໃນກຸ່ມທີ່ມີລາຍຮັບຕ່ຳທີ່ສຸດ 40% ຂອງປະຊາກອນທັງໝົດ ແມ່ນມີການສຶກສາສະເລ່ຍ 4.4 ປີ, ໃນຂະນະທີ່ຜູ້ທີ່ມີລາຍຮັບສູງທີ່ສຸດ 20% ຂອງປະຊາກອນທີ່ມີການສຶກສາ 8 ປີ, ແລະ ມີພຽງ 6% ຂອງຜູ້ທີ່ມີລາຍຮັບຕ່ຳສຸດ 40% ຂອງປະຊາກອນທັງໝົດໄດ້ຮັບການສຶກສາຊັ້ນມັດທະຍົມຂຶ້ນໄປ, ໃນຂະນະທີ່ປະມານໜຶ່ງສ່ວນຫ້າ (34%) ຂອງກຸ່ມທີ່ມີລາຍຮັບສູງທີ່ສຸດ 20% ຂອງປະຊາກອນໄດ້ຮັບການສຶກສາຊັ້ນມັດທະຍົມຂຶ້ນໄປ (ຕາຕະລາງ 1). ເນື່ອງຈາກອັດຕາການເຂົ້າຮຽນທີ່ຕ່ຳຫຼາຍຄືດັ່ງກ່າວ ຈຶ່ງໄດ້ເຮັດໃຫ້ຜູ້ທີ່ມີລາຍຮັບຕ່ຳທີ່ສຸດ 40% ຂອງປະຊາກອນມີທ່າອ່ຽງທີ່ຈະເຮັດວຽກໃນຂະແໜງກະສິກຳທີ່ມີປະສິດທິຜົນໃນການຜະລິດຕ່ຳຫຼາຍກວ່າຜູ້ທີ່ມີລາຍຮັບສູງທີ່ສຸດ 20% ຂອງປະຊາກອນເຖິງສອງເທົ່າ. ການທີ່ມີຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກຈຳນວນຫຼາຍເຮັດວຽກໃນຂະແໜງກະສິກຳ ແລະ ຂະແໜງທີ່ບໍ່ເປັນທາງການ ຈະເພີ່ມຄວາມສ່ຽງໃນການໄດ້ຮັບຜົນກະທົບທີ່ອາດເກີດຂຶ້ນກະທັນຫັນ. ປັດໄຈຕົ້ນຕໍທີ່ເຮັດໃຫ້ມີຄວາມສ່ຽງປະກອບດ້ວຍສາມປັດໄຈຫຼັກຄື: ການປ່ຽນແປງຂອງລາຄາສິນຄ້າກະສິກຳ; ການສູນເສຍທີ່ດິນປູກຝັງ; ແລະ ລາຍຈ່າຍທາງດ້ານການປິ່ນປົວພະຍາດທີ່ຮ້າຍແຮງ ເນື່ອງຈາກຜູ້ທີ່ທຸກຍາກທີ່ເຮັດວຽກຂັ້ນຕ່ຳໃນຂະແໜງທີ່ບໍ່ເປັນທາງການມັກຈະໄດ້ຮັບການຄຸ້ມຄອງຈາກປະກັນສຸຂະພາບຕ່ຳຫຼາຍ(ທະນາຄານໂລກ,2015). ຄວາມທຸກຍາກ, ທີ່ຕັ້ງ ແລະ ການດຳລົງຊີວິດມີການພົວພັນກັນຢ່າງສະໜິດແໜ້ນ, ເຊິ່ງເຮັດໃຫ້ອັດຕາຄວາມທຸກຍາກສູງຢູ່ໃນເຂດຊົນນະບົດ ແລະ ເຂດພູສູງ. ໝາຍວ່າ ຜູ້ທີ່ທຸກຍາກສ່ວນຫຼາຍແມ່ນຄົນຊົນເຜົ່າກຸ່ມນ້ອຍ (ໂດຍສະເພາະ ກຸ່ມຄົນທີ່ບໍ່ແມ່ນເຜົ່າລາວ-ໄຕ, ເຊິ່ງເປັນຊົນເຜົ່າກຸ່ມໃຫຍ່ທີ່ຄວບຄຸມອັດຕາສ່ວນເຖິງ 62% ຂອງປະຊາກອນທັງໝົດ), ເຊິ່ງເປັນຜູ້ທີ່ມີລະດັບການສຶກສາຕ່ຳ, ເຮັດກະສິກຳເປັນຫຼັກ ແລະ ອາໄສໃນເຂດຫ່າງໄກສອກຫຼີກ.

ຕາຕະລາງ 1: ສົມທຽບຈຸດພິເສດຂອງຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກ ກັບ ຜູ້ທີ່ມີລາຍຮັບສູງທີ່ສຸດ 20% ຂອງປະຊາກອນ

	ລາຍຮັບສູງທີ່ສຸດ 20% ຂອງປະຊາກອນ	ລາຍຮັບຕ່ຳທີ່ສຸດ 40% ຂອງປະຊາກອນ	ຜູ້ທຸກຍາກ	ສປປ ລາວ
ການຊົມໃຊ້ຕໍ່ຫົວຄົນ ຕໍ່ເດືອນ ('000 ລາຄາປີ 2003 ຫົວໜ່ວຍ LAK)	404	88	72	197
ອັດຕາສ່ວນຂອງຄົວເຮືອນທີ່ຢູ່ໃນຕົວເມືອງ (%)	50	16	13	30
ການໄດ້ຮັບການສຶກສາສະເລ່ຍເປັນປີ[1] (ປີ)	8	4	4	6
ອັດຕາສ່ວນຂອງຜູ້ທີ່ມີອາຍຸໃນເກນເຮັດວຽກທີ່ມີການສຶກສາສູງກວ່າຊັ້ນມັດທະຍົມ (%)	34	6	6	18
ອັດຕາສ່ວນຂອງຄົວເຮືອນທີ່ມີແຫຼ່ງລາຍຮັບຈາກຂະແໜງທີ່ບໍ່ແມ່ນກະສິກຳ (%)	69	25	20	44
ອັດຕາສ່ວນຂອງຄົວເຮືອນທີ່ຂາຍເຂົ້າ (%)	43	54	53	51
ອັດຕາສ່ວນຂອງສະມາຊິກຄົວເຮືອນທີ່ເຮັດວຽກໃນຂະແໜງກະສິກຳ (%)	29	57	58	47
ອັດຕາສ່ວນຂອງສະມາຊິກຄົວເຮືອນທີ່ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ (%)	24	8	7	14

ແຫຼ່ງຂໍ້ມູນ: ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ (LECS), 2012/13.
ໝາຍເຫດ[1]: ຈຳນວນປີທີ່ໄດ້ຮັບການສຶກສາສູງສຸດຂອງສະມາຊິກຄົວເຮືອນທີ່ມີອາຍຸ 15 ຂຶ້ນໄປ

2. ຢ່າງໃດກໍ່ຕາມ, ຜູ້ທີ່ທຸກຍາກມີຫຼາຍປະເພດ ແລະ ມີຂໍ້ຈຳກັດທີ່ບໍ່ຄືກັນ (Ansoms ແລະ McKay, 2010). ຕົວຢ່າງ: ບໍ່ແມ່ນທັງໝົດຂອງຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກດຳລົງຊີວິດດ້ວຍການເຮັດກະສິກຳ, ອາໄສໃນເຂດຊົນນະບົດ ຫຼື ບໍ່ມີການສຶກສາ. ສະນັ້ນ, ຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກຈຶ່ງບໍ່ສາມາດລວມເປັນກຸ່ມດຽວໄດ້, ການທຳຄວາມເຂົ້າໃຈກ່ຽວກັບຄວາມແຕກຕ່າງ

ລະຫວ່າງກຸ່ມຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກ ຈະຊ່ວຍໃນການຄັດເລືອກ ຫຼື ການສ້າງນະໂຍບາຍສະເພາະສຳລັບແຕ່ລະກຸ່ມ ເພື່ອແກ້ໄຂຄວາມຕ້ອງສະເພາະຂອງເຂົາເຈົ້າ. ບົດນະໂຍບາຍໂດຍສັງເຂບສະບັບນີ້ ຈະສະໜອງຂໍ້ມູນກ່ຽວກັບການແບ່ງກຸ່ມຜູ້ທີ່ທຸກຍາກ. ເຊິ່ງຈະເນັ້ນໃສ່ຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກ ເນື່ອງຈາກວ່າເຂົາເຈົ້າເປັນກຸ່ມທີ່ມີບັນຫາ "ໜັກໜ່ວງ" ຫຼາຍ ຫຼື ມີການປ່ຽນແປງສະຖານະພາບຢູ່ເລື້ອຍໆໃນແຕ່ລະໄລຍະ ບາງທີກໍ່ຫຼຸດພົ້ນຈາກຄວາມທຸກຍາກ ແລະ ບາງທີກໍ່ກັບມາເປັນຜູ້ທຸກຍາກອີກ. ການຈັດແບ່ງຜູ້ທີ່ທຸກຍາກອອກເປັນກຸ່ມທີ່ແຕກຕ່າງກັນ ໄດ້ອີງໃສ່ການວິເຄາະກຸ່ມຄົນ ໂດຍໃຊ້ຂໍ້ມູນຈາກການສຳຫຼວດ LECS (ກ່ອງ 1), ໂດຍສະເພາະຂໍ້ມູນຈາກການສຳຫຼວດ LECS 3, 4 ແລະ 5 ເພື່ອສຶກສາເບິ່ງຂໍ້ຈຳກັດທີ່ເກີດຂຶ້ນໃນແຕ່ລະໄລຍະ ຫຼື ຈຸດພິເສດໃດທີ່ມີຄວາມສຳຄັນຫຼາຍກວ່າ ແລະ ໜ້ອຍກວ່າ.

ກ່ອງ 1: ການນຳໃຊ້ການວິເຄາະກຸ່ມຄົນ ເພື່ອແບ່ງຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກອອກເປັນກຸ່ມທີ່ມີຈຸດພິເສດແຕກຕ່າງກັນ

ການວິເຄາະກຸ່ມຄົນແມ່ນເຕັກນິກທາງດ້ານສະຖິຕິໃນການບອກຈຸດພິເສດ ແລະ ປະກອບດ້ວຍຫຼາຍຕົວປ່ຽນ ເຊິ່ງຖືກນຳໃຊ້ເພື່ອການແບ່ງປະຊາກອນອອກເປັນກຸ່ມ, ແຕ່ລະກຸ່ມຈະມີຈຸດພິເສດຄືກັນ, ໃນຂະນະທີ່ມີຄວາມແຕກຕ່າງຈາກກຸ່ມອື່ນ. ສະນັ້ນ, ບັນດາກຸ່ມທີ່ໄດ້ຖືກກຳນົດຂຶ້ນ ໂດຍການແບ່ງຂໍ້ສັງເກດອອກເປັນກຸ່ມ ເພື່ອຫຼຸດຜ່ອນຄວາມແຕກຕ່າງກັນພາຍໃນກຸ່ມ ແລະ ເພີ່ມຄວາມແຕກຕ່າງການລະຫວ່າງກຸ່ມ. ການວິເຄາະດັ່ງກ່າວປະກອບມີສາມບາດກ້າວຄື: ບາດກ້າວການຄັດເລືອກຕົວປ່ຽນ; ບາດກ້າວການເລືອກຫຼັກການການແບ່ງກຸ່ມ ແລະ ກຳນົດຈຳນວນກຸ່ມ; ແລະ ບາດກ້າວສຸດທ້າຍແມ່ນການຢັ້ງຢືນຄວາມຖືກຕ້ອງ ແລະ ຕີຄວາມໝາຍຂອງຜົນໄດ້ຮັບ ໂດຍການໃຫ້ຄຳນິຍາມ ແລະ ໃສ່ຊື່ກຸ່ມຕ່າງໆທີ່ກຳນົດໄດ້. ຕົວປ່ຽນຕ່າງໆທີ່ຖືກນຳໃຊ້ເຂົ້າໃນການວິເຄາະກຸ່ມຄົນແມ່ນນອນຢູ່ໃນໝວດຕົວປ່ຽນດັ່ງນີ້: (i) ຕົວປ່ຽນທາງດ້ານປັດໄຈຂອງການຜະລິດຂອງຄົວເຮືອນ ໂດຍສະເພາະຊັບສິນທີ່ມີຮູບຮ່າງ (ເຊັ່ນ: ສິດໃນການຄອບຄອງທີ່ດິນ ແລະ ຊັບສິນອື່ນໆທີ່ມີປະສິດທິຜົນ) ແລະ ກຳລັງແຮງງານ (ຕົ້ນຕໍແມ່ນ (a) ລະດັບການສຶກສາຂອງແຮງງານ ເຊັ່ນ ອັດຕາສ່ວນຂອງສະມາຊິກຄົວເຮືອນໃນເກນອາຍຸເຮັດວຽກທີ່ບໍ່ໄດ້ຮັບການສຶກສາທາງການເລີຍ, ມີລະດັບການສຶກສາຊັ້ນປະຖົມ ແລະ ຊັ້ນມັດທະຍົມເປັນຢ່າງຕ່ຳ, ແລະ (b) ສຸຂະພາບຂອງແຮງງານ, ເຊິ່ງວັດແທກໄດ້ຈາກວິກິດການ ທາງດ້ານສຸຂະພາບທີ່ເຂົາເຈົ້າພົບພໍໃນໄລຍະຜ່ານມາ); (ii) ຕົວປ່ຽນທາງດ້ານການລະໂອກາດຕ່າງໆແມ່ນວັດແທກໂດຍການດຳລົງຊີວິດຂອງຄົວເຮືອນ (ເປັນຕົ້ນ ຄົວເຮືອນທີ່ມີລາຍຮັບຈາກຂະແໜງທີ່ບໍ່ແມ່ນກະສິກຳ, ເຮັດທຸລະກິດທີ່ບໍ່ແມ່ນກະສິກຳ); ແລະ (iii) ຕົວປ່ຽນທາງດ້ານການເຂົ້າເຖິງການບໍລິການຕ່າງໆ ເປັນຕົ້ນການເຂົ້າເຖິງແຫຼ່ງນ້ຳທີ່ໄດ້ຮັບການປັບປຸງ, ຫ້ອງນ້ຳທີ່ໄດ້ຮັບການປັບປຸງ ແລະ ການມີໄຟຟ້າໃຊ້. ເນື່ອງຈາກວ່າຕົວປ່ຽນຂອງການແບ່ງກຸ່ມເຫຼົ່ານີ້ເປັນການປະສົມລະຫວ່າງຂໍ້ມູນເມຫຣິກ ແລະ ຂໍ້ມູນທີ່ວັດແທກໃນຫຼາຍລະດັບ, ໃນການແບ່ງກຸ່ມຈຶ່ງນຳໃຊ້ວິທີທີ່ອີງໃສ່ຄະແນນຂອງປັດໄຈທີ່ໄດ້ຈາກການວິເຄາະອົງປະກອບພື້ນຖານຂອງຕົວປ່ຽນທີ່ກ່າວມາຂ້າງເທິງ. ໃນສາມຫຼັກການການແບ່ງກຸ່ມທີ່ນິຍົມໃຊ້ຫຼາຍທີ່ສຸດ, ພວກເຮົາໄດ້ເລືອກຫຼັກການແບ່ງກຸ່ມໂດຍການແບ່ງເປັນລຳດັບຊັ້ນ, ເຊິ່ງມີຊື່ວ່າວິທີການແຍກສ່ວນ (ສ່ວນຫຼາຍເອີ້ນວ່າ k-means) ແລະ ການແບ່ງກຸ່ມດ້ວຍສອງບາດກ້າວ (ການປະສົມປະສານລະຫວ່າງສອງບາດກ້າວທຳອິດ). ການເລືອກຫຼັກການແບ່ງກຸ່ມເປັນລຳດັບຊັ້ນ ແມ່ນຍ້ອນໃນເບື້ອງຕົ້ນພວກເຮົາບໍ່ຮູ້ວ່າຈຳນວນກຸ່ມທັງໝົດຈະເປັນຈັກກຸ່ມ. ສະນັ້ນ, ການນຳໃຊ້ຂັ້ນຕອນດັ່ງກ່າວ ຈະດີກວ່າການສົມມຸດຈຳນວນຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກຂຶ້ນມາ, ເຊິ່ງຈະຊ່ວຍເຮັດໃຫ້ຮູ້ລະດັບຄວາມແຕກຕ່າງຢູ່ໃນປະຊາກອນ ໄປພ້ອມກັບການວິເຄາະຂໍ້ມູນຂອງແຕ່ລະກຸ່ມ.

ພວກເຮົາຈະອີງໃສ່ການວິເຄາະຜົນໄດ້ຮັບຈາກການນຳໃຊ້ algorithm ແບ່ງກຸ່ມດ້ວຍຫຼັກການພົວພັນເຊິ່ງກັນ ແລະ ກັນ ຂອງ Wards. ຈຳນວນກຸ່ມທີ່ເໝາະສົມທີ່ສຸດແມ່ນກຳນົດຂຶ້ນຈາກການກວດກວດກາທີ່ອີງໃສ່ຮູບສະແດງ dendro-

gram ຄຽງຄູ່ກັນກັບເງື່ອນໄຂທາງດ້ານປະລິມານ, Calinksi and Harabasz pseudo F-Index ຫຼື the Duda-Hart Je(2)/Je(1) index.

ພາບປະກອບ 1: ການສະແດງການວິເຄາະກຸ່ມດ້ວຍຮູບພາບ



ໃນການວິເຄາະກຸ່ມ, ບັນດາຂໍ້ສັງເກດຈະຖືກລວມເຂົ້າເປັນກຸ່ມສະເພາະ ແລະ ໃສ່ຂໍ້ມູນໃຫ້ກຸ່ມ. ຕົວຢ່າງ ທີ່ໃກ້ຄຽງທີ່ສຸດ ແມ່ນໄດ້ສະແດງຢູ່ໃນຮູບພາບຂ້າງຊ້າຍ ເຊິ່ງປະກອບດ້ວຍສາມຮູບສະແດງທີ່ເປັນຕົວແທນຂອງການສຶກສາ, ການເຂົ້າເຖິງພື້ນຖານໂຄງລ່າງ ແລະ ການເອື່ອຍອີງໃສ່ລາຍຮັບທີ່ໄດ້ຈາກການເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ. ຈຸດສີຟ້າແມ່ນກຸ່ມຄົວເຮືອນທີ່ຍ້າຍໄປເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ, ມີຄວາມສາມາດໃນການເຂົ້າເຖິງໂຄງລ່າງສູງ ແລະ ມີລະດັບການສຶກສາທີ່ດີ. ກົງກັນຂ້າມ, ຈຸດສີແດງ ແມ່ນກຸ່ມຄົວເຮືອນທີ່ມີລະດັບການສຶກສາຕ່ຳ, ຄວາມສາມາດໃນການເຂົ້າເຖິງໂຄງລ່າງຕ່ຳ ແລະ ບໍ່ທັນສາມາດຍ້າຍໄປເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້, ໃນຂະນະທີ່ຈຸດສີຂຽວແມ່ນຕົວເຮືອນທີ່ຍັງເຮັດວຽກໃນຂະແໜງກະສິກຳ, ແຕ່ມີການສຶກສາ ແລະ ຄວາມສາມາດໃນການເຂົ້າເຖິງໂຄງລ່າງທີ່ດີກວ່າ.

ການແບ່ງເປັນສີ່ກຸ່ມເຫັນວ່າເປັນຈຳນວນກຸ່ມທີ່ເໝາະສົມທີ່ສຸດສຳລັບສປປລາວ ແລະ ມີການລະບຸຂໍ້ມູນສຳລັບແຕ່ລະກຸ່ມ ພ້ອມທັງຕີຄວາມໝາຍຜົນໄດ້ຮັບຈາກການແບ່ງກຸ່ມ. ເພື່ອກວດເບິ່ງຂໍ້ມູນຢ່າງຮອບຄອບ, ຂໍ້ມູນສຳລັບ ສີ່ກຸ່ມ ທີ່ຖືກສ້າງຂຶ້ນໂດຍການນຳໃຊ້ວິທີແບ່ງກຸ່ມດ້ວຍຄ່າສະເລ່ຍ k ກໍ່ຖືກປະເມີນເຊັ່ນກັນ ແລະ ເຫັນວ່າມີຜົນໄດ້ຮັບທີ່ໃກ້ຄຽງກັນຫຼາຍຄັ້ງ. ຂໍ້ມູນຂອງ ກຸ່ມ ຈະປະກອບດ້ວຍຕົວປ່ຽນ ສອງຕົວທີ່ຖືກລວມຢູ່ໃນການວິເຄາະກຸ່ມ ແລະ ຕົວປ່ຽນອື່ນໆທີ່ບໍ່ຖືກລວມຢູ່ໃນການວິເຄາະ ເຊັ່ນ: ຊົນເຜົ່າ ແລະ ທີ່ຕັ້ງພູມສັນຖານ. ການວິເຄາະຂໍ້ມູນຂອງກຸ່ມເຫຼົ່ານີ້ຈະຊ່ວຍລະບຸຂໍ້ຈຳກັດຕົ້ນຕໍສຳລັບແຕ່ລະກຸ່ມເພື່ອແນະນຳມາດຕະການໃນການຈັດຕັ້ງປະຕິບັດນະໂຍບາຍຕ່າງໆທີ່ໜ້າຈະມີປະສິດທິພາບໃນການຫຼຸດຜ່ອນຂໍ້ຈຳກັດດັ່ງກ່າວ. ອີງໃສ່ຂໍ້ມູນຈາກການສຳຫຼວດ LECS ທັງສາມຄັ້ງດັ່ງທີ່ກ່າວມາກ່ອນນີ້ ພວກເຮົາສາມາດປຽບທຽບການປ່ຽນແປງຂອງກຸ່ມເຫຼົ່ານີ້ໃນໄລຍະສິບປີທີ່ຜ່ານມານັບແຕ່ສົກປີ 2002/03 ຫາ 2012/13. ການເຮັດແບບນີ້ ໄດ້ຊ່ວຍໃຫ້ພວກເຮົາສາມາດກຳນົດໄດ້ຂໍ້ຈຳກັດໃໝ່ໆມີຫຍັງແດ່ໃນແຕ່ລະໄລຍະ ຫຼື ສາມາດກຳນົດບາງຈຸດພິເສດທີ່ຈະມີຄວາມສຳຄັນຫຼາຍກວ່າ ແລະ ໜ້ອຍກວ່າ. ສະນັ້ນ, ໃນການສ້າງກຸ່ມເຫຼົ່ານີ້ ພວກເຮົາໄດ້ຕັ້ງຄຳຖາມກ່ຽວກັບ (i) ຊັບສິນທາງດ້ານສິ່ງອຳນວຍຄວາມສະດວກ ລວມທັງແຮງງານ ແລະ ສິ່ງຂອງ; (ii) ດ້ານການລະໂອກາດ ເປັນຕົ້ນປະເພດຂອງກິດຈະກຳຂອງການດຳລົງຊີວິດ; (iii) ຄວາມສ່ຽງໃນການຂາດແຄນ; ຫຼື (iv) ການບໍລິການປະເພດໃດທີ່ຂາດແຄນທີ່ສຸດໃນກຸ່ມນີ້ທຽບກັບກຸ່ມອື່ນ. ບັນດາຈຸດພິເສດທີ່ສະແດງໃຫ້ເຫັນເຖິງສິ່ງທີ່ຂາດແຄນທີ່ສຸດສຳລັບກຸ່ມຄົນໜຶ່ງທີ່ບໍ່ແມ່ນສິ່ງທີ່ຂາດແຄນທີ່ສຸດຂອງກຸ່ມອື່ນ ຈະຖືວ່າເປັນຂໍ້ຈຳກັດຕົ້ນຕໍທີ່ຜູ້ທຸກຍາກກຳລັງປະເຊີນຢູ່. ພ້ອມນັ້ນ, ພວກເຮົາຍັງໃຊ້ຄວາມແຕກຕ່າງທາງດ້ານສະມາຊິກໃນຄົວເຮືອນ ຫຼື ຈຸດພິເສດດ້ານພູມສັນຖານເພື່ອການກຳນົດກຸ່ມທີ່ເປັນເປົ້າໝາຍຢູ່ໃນແຕ່ລະກຸ່ມ.

ຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກສາມາດແບ່ງອອກເປັນສີ່ກຸ່ມຕົ້ນຕໍ

3. ຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກໃນ ສປປ ລາວ ສາມາດແບ່ງອອກເປັນ ສີ່ກຸ່ມ ເຊິ່ງແຕ່ລະກຸ່ມຈະຕ້ອງມີມາດຕະການແກ້ໄຂຄວາມທຸກຍາກສະເພາະໃຜລາວ. ອີງຕາມການວິເຄາະຢູ່ໃນກ່ອງ 1, ຜູ້ທຸກຍາກ ແລະ ໃກ້ຄວາມທຸກຍາກໄດ້ຖືກຈັດແບ່ງເປັນ ສີ່ກຸ່ມດັ່ງນີ້: (i) ກຸ່ມ 1 – ເປັນກຸ່ມຄົວເຮືອນທີ່ເຮັດກະສິກຳທີ່ມີປະສິດທິພາບໃນການຜະລິດຕ່ຳ, ອາໄສຢູ່ໃນເຂດຫ່າງໄກສອກຫຼີກ, ມີລະດັບການສຶກສາຕ່ຳ; (ii) ກຸ່ມ 2 – ເປັນກຸ່ມຄົວເຮືອນທີ່ມີ ເຮັດກະສິກຳທີ່ມີປະສິດທິພາບໃນການຜະລິດຕ່ຳ, ແຕ່ສາມາດສ້າງຜົນຜະລິດເກີນດຸນ, ອາໄສໃນເຂດທີ່ຫ່າງໄກແຕ່ບໍ່ໄກເທົ່າກຸ່ມກ່ອນໜ້ານີ້ ແລະ ມີລະດັບການສຶກສາຕ່ຳຫາກາງ, ແຕ່ບໍ່ທັນສາມາດເຂົ້າເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້ເທື່ອ; (iii) ກຸ່ມ 3 – ເປັນກຸ່ມຄົວເຮືອນທີ່ສ່ວນໃຫຍ່ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳທີ່ມີປະສິດທິພາບໃນການຜະລິດຕ່ຳ ແລະ ບໍ່ເປັນທາງການ, ມີລະດັບການສຶກສາປານກາງ ແລະ ອາໄສໃນເຂດຕົວເມືອງ; ແລະ (iv) ກຸ່ມ 4 – ເປັນກຸ່ມຄົວເຮືອນທີ່ພົບວິກິດທາງດ້ານສຸຂະພາບ.

4. ກຸ່ມທີ່ມີຂະໜາດໃຫຍ່ທີ່ສຸດຢູ່ໃນຈຳນວນຜູ້ທີ່ມີລາຍຮັບຕ່ຳທີ່ສຸດ 40% ຂອງປະຊາກອນແມ່ນກຸ່ມຄົວເຮືອນທີ່ເຮັດກະສິກຳທີ່ມີປະສິດທິພາບໃນການຜະລິດຕ່ຳ, ມີລະດັບການສຶກສາຕ່ຳ (ກຸ່ມ 1). ກວມ 42% ຂອງຈຳນວນຜູ້ທີ່ມີລາຍຮັບຕ່ຳສຸດທັງໝົດໃນ ສົກປີ 2012/13 (ຮູບສະແດງ 1), ຈຸດພິເສດຂອງກຸ່ມ 1 ແມ່ນກຳນົດດ້ວຍທີ່ຕັ້ງທີ່ຢູ່ຫ່າງໄກສອກຫຼີກ, ຂາດໂອກາດທາງດ້ານເສດຖະກິດໃນຂະແໜງທີ່ມີປະສິດທິພາບໃນການຜະລິດ, ມີລະດັບການສຶກສາຕ່ຳ ແລະ ໄດ້ຮັບການບໍລິການທີ່ຈຳກັດ. ດ້ານທີ່ຕັ້ງທີ່ຢູ່ຫ່າງໄກສອກຫຼີກຂອງຄົວເຮືອນໃນກຸ່ມ 1 ແມ່ນເຫັນໄດ້ຈາກລະດັບການໃຊ້ໄຟຟ້າຍັງຕ່ຳກວ່າສາມກຸ່ມອື່ນ, ເຊິ່ງມີອັດຕາການນຳໃຊ້ພຽງແຕ່ 57% ແລະ ເສັ້ນທາງຄົມມະນາ ຄົມຍັງມີຄວາມຫຍຸ້ງຍາກ, ມີພຽງ 47% ຂອງຄົວເຮືອນເທົ່ານັ້ນ ທີ່ອາໄສຢູ່ໃນບ້ານທີ່ມີເສັ້ນທາງທຽວໄດ້ທຸກລະດູ. ພ້ອມນັ້ນ, ລະດັບການສຶກສາກໍ່ຕ່ຳກວ່າກຸ່ມອື່ນຫຼາຍ, ມີພຽງ 8% ຂອງສະມາຊິກຄົວເຮືອນທີ່ຢູ່ໃນເກນອາຍຸເຮັດວຽກມີຄວາມຮູ້ໃນລະດັບມັດທະຍົມຂຶ້ນໄປ. ພ້ອມນັ້ນ, ກໍ່ມີການເອື່ອຍອີງໃສ່ການເຮັດກະສິກຳສູງຫຼາຍ, ມີພຽງ 7% ຂອງສະມາຊິກຄົວເຮືອນໃນກຸ່ມ 1 ທີ່ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ (ຕາຕະລາງ 2). ເຖິງວ່າຄົວເຮືອນໄດ້ມີການເອື່ອຍອີງໃສ່ການເຮັດກະສິກຳສູງຫຼາຍກໍ່ຕາມ, 50% ຂອງຄົວເຮືອນຄ້າ ຂາຍເຂົ້າ. ຕົວຊີ້ວັດທາງດ້ານຈຸດພິເສດທັງໝົດນີ້ ໄດ້ເຫັນຊີ້ໃຫ້ເຫັນວ່າຄົວເຮືອນຂາດໂອກາດຍ້ອນອາໄສຢູ່ເຂດຫ່າງໄກສອກຫຼີກ ແລະ ມີຄວາມສາມາດໃນການເຮັດວຽກຢູ່ໃນຂົງເຂດທີ່ມີປະສິດທິພາບໃນການຜະລິດ ກໍ່ຄືຂະແໜງທີ່ບໍ່ແມ່ນກະສິກຳຍັງຕ່ຳ ເນື່ອງຈາກເຂົາເຈົ້າມີລະດັບການສຶກສາຕ່ຳ. ໃນກຸ່ມ 1 ສ່ວນໃຫຍ່ແມ່ນເປັນຊົນເຜົ່າກຸ່ມນ້ອຍ, ເຊິ່ງກວມເຖິງ 70%

ຮູບສະແດງ 1: ອັດຕາສ່ວນຂອງຜູ້ທີ່ມີລາຍຮັບຕ່ຳທີ່ສຸດ 40% ຂອງປະຊາກອນ ທັງໝົດ ແບ່ງຕາມກຸ່ມ, 2012/13



ໝາຍເຫດ:

ກຸ່ມ 1: ກຸ່ມຄົວເຮືອນທີ່ເຮັດກະສິກຳທີ່ມີປະສິດທິພາບໃນການຜະລິດຕ່ຳ, ມີລະດັບການສຶກສາຕ່ຳ

ກຸ່ມ 2: ກຸ່ມຄົວເຮືອນທີ່ອາໄສຢູ່ເຂດຊົນນະບົດທີ່ຫ່າງໄກຫຼາຍ, ມີທີ່ດິນໃນຄອບຄອງຫຼາຍກວ່າກຸ່ມຜ່ານມາ ແລະ ມີລະດັບການສຶກສາດີກວ່າ ແຕ່ຍັງບໍ່ສາມາດເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້ເທື່ອ

ກຸ່ມ 3: ຄົວເຮືອນທີ່ອາໄສຢູ່ໃນເຂດຕົວເມືອງທີ່ມີທຶນສະສົມສູງກວ່າກຸ່ມທີ່ຜ່ານມາ ແລະ ສາມາດເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ ແຕ່ຍັງຢູ່ໃນຂະແໜງວຽກງານທີ່ມີຜະລິດຕະພາບຕ່ຳ

ກຸ່ມ 4: ກຸ່ມທີ່ປະກອບດ້ວຍຄົວເຮືອນທີ່ທຸກຍາກເນື່ອງຈາກບັນຫາທາງສຸຂະພາບ ແລະ ດ້ວຍເຫດນັ້ນຈຶ່ງຖືກກຳນົດດ້ວຍລະດັບຄວາມບອບບາງຂອງຄົວເຮືອນ

ແຫຼ່ງຂໍ້ມູນ: LECS, 2012/13.

ຂອງກຸ່ມ, ສ່ວນຫຼາຍແມ່ນເປັນຄົນ ເຜົ່າຂະແມ ເຊິ່ງກວມ 48% ຂອງກຸ່ມ, ຮອງລົງມາແມ່ນເຜົ່າລາວ-ໄທ ກວມ 30%; ເຊິ່ງເຜົ່າລາວ-ໄທເປັນເຜົ່າທີ່ກວມອັດຕາສ່ວນໜ້ອຍທີ່ສຸດໃນທັງໝົດສີ່ກຸ່ມ. ດັ່ງນັ້ນ, ການມີສ່ວນຮ່ວມຢູ່ໃນສັງຄົມຈຶ່ງເປັນບັນຫາທ້າທາຍຫຼາຍສຳລັບກຸ່ມນີ້.

ຕາຕະລາງ 2: ຈຸດພິເສດຂອງຜູ້ທຸກຍາກ ແລະ ໃກ້ຄວາມທຸກຍາກໃນສີ່ກຸ່ມຕົ້ນຕໍ (%), 2012/13

	ກຸ່ມ 1 (ເຮັດກະສິກຳ, ຢູ່ຫ່າງໄກ, ການສຶກສາຕ່ຳ)	ກຸ່ມ 2 (ເຮັດກະສິກຳ, ຢູ່ຫ່າງໄກບໍ່ຫຼາຍ, ການສຶກສາຕ່ຳ-ກາງ, ບໍ່ສາມາດອອກຈາກການເຮັດວຽກໃນຂະແໜງກະສິກຳ)	ກຸ່ມ 3 (ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ, ຢູ່ເຂດຕົວເມືອງ, ການສຶກສາລະດັບປານກາງ)	ກຸ່ມ 4 (ເຮັດກະສິກຳ, ພົບວິກິດທາງດ້ານສຸຂະພາບ)
ເຂດຕົວເມືອງ (%)	3	16	52	14
ເຂດພູສູງ (%)	46	28	8	27
ເຜົ່າລາວ-ໄທ (%)	30	71	92	49
ມອນ-ຂະແມ (%)	48	21	4	43
ຈີນ-ຕິເບດ (%)	5	1	0	1
ມົ້ງ-ລື້-ມ້ຽນ (%)	15	5	3	7
ມີທີ່ດິນປູກຝັງ (ຮຕ)	2.1	2.6	1.6	2.3
ມີທີ່ດິນຫຼາຍກວ່າ 2 ຮຕ (%)	33	41	26	39
ອັດຕາສ່ວນຂອງສະມາຊິກຄົວເຮືອນທີ່ຢູ່ໃນເກນອາຍຸເຮັດ ວຽກທີ່ມີການສຶກສາຊັ້ນມັດທະຍົມເປັນຢ່າງຕ່ຳ (%)	8	23	57	19
ມີຕູ້ເຢັນ (%)	2	47	93	27
ມີບ້ານກໍ່ດ້ວຍຊີມັງ ຫຼື ດິນຈີ່ (%)	4	26	67	16
ມີວິດຖ່າຍທີ່ປັບປຸງແລ້ວ (%)	21	77	93	46
ສະມາຊິກຄົວເຮືອນທີ່ໄດ້ເຂົ້າໂຮງໝໍໃນ 12 ເດືອນ ທີ່ຜ່ານມາ (%)	2	0	4	58
ສະມາຊິກຄົວເຮືອນເປັນພະຍາດຊໍາເຮື້ອ (%)	0	0	1	42
ມີລາຍຮັບຈາກຂະແໜງທີ່ບໍ່ແມ່ນກະສິກຳ (%)	7	20	78	23
ຄົວເຮືອນທີ່ມີລາຍຮັບຈາກຂະແໜງທີ່ບໍ່ແມ່ນກະສິກຳຢ່າງດຽວ (%)	0	2	30	4
ຄົວເຮືອນທີ່ມີລາຍຮັບປະສົມ (ກະສິກຳ / ບໍ່ແມ່ນກະສິກຳ) (%)	7	18	48	19
ຄົວເຮືອນທີ່ມີລາຍຮັບຈາກຂະແໜງກະສິກຳຢ່າງດຽວ (%)	90	78	20	76
ຂາຍເຂົ້າ (%)	50	61	53	51
ອັດຕາສ່ວນຂອງຄົວເຮືອນທີ່ຂາຍເຂົ້າຢູ່ໃນຄົວເຮືອນ ເຂດຊົນນະບົດ (%)	50	62	70	53
ມີໄຟຟ້າໃຊ້ (%)	57	94	99	70
ເຂົ້າເຖິງຖະໜົນຫົນທາງ (%)	47	75	86	63
ອັດຕາຄວາມທຸກຍາກ (%)	50	24	12	13

ແຫຼ່ງຂໍ້ມູນ: ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ (LECS), 2012/13.

5. ກຸ່ມທີ່ມີຂະໜາດໃຫຍ່ເປັນອັນດັບສອງແມ່ນກຸ່ມຄົວເຮືອນທີ່ອາໄສຢູ່ເຂດຊົນນະບົດທີ່ບ່າງໄກຫຼາຍ, ມີທີ່ດິນໃນຄອບຄອງຫຼາຍກວ່າກຸ່ມຜ່ານມາ ແລະ ມີລະດັບການສຶກສາດີກວ່າ ແຕ່ຍັງບໍ່ສາມາດເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້ເທື່ອ (ກຸ່ມ 2). ຄົວເຮືອນໃນກຸ່ມ 2 ກວມອັດຕາສ່ວນສູງເປັນອັນດັບສອງ, ກວມ 28% ຂອງຄົວເຮືອນທີ່ທຸກຍາກທີ່ສຸດທັງໝົດ (ຮູບສະແດງ 1). ຊົນເຜົ່າລາວ-ໄທ ກວມອັດຕາສ່ວນຫຼາຍກວ່າໝູ່ຢູ່ໃນກຸ່ມນີ້, ກວມເຖິງ 71% ຂອງກຸ່ມ, ເຊິ່ງສູງກວ່າອັດຕາສ່ວນຂອງເຜົ່າລາວ-ໄທ ໃນປະຊາກອນທົ່ວປະເທດພຽງເລັກນ້ອຍ, ເຊິ່ງອັດຕາສ່ວນໃນປະຊາກອນທົ່ວປະເທດແມ່ນ 62%. ກຸ່ມ 2 ມີຄວາມສາມາດໃນການເຂົ້າເຖິງພື້ນຖານໂຄງລ່າງໄດ້ດີກວ່າກຸ່ມ 1, 16% ຂອງຄົວເຮືອນພາຍໃນກຸ່ມແມ່ນອາໄສໃນເຂດຕົວເມືອງ ແຕ່ອັດຕາສ່ວນດັ່ງກ່າວໃນກຸ່ມ 1 ມີພຽງ 3% ເທົ່ານັ້ນ ແລະ 75% ຂອງກຸ່ມແມ່ນສາມາດເຂົ້າເຖິງເສັ້ນທາງທີ່ສາມາດຫຽວໄດ້ທຸກລະດູ. ອັດຕາການມີໄຟຟ້າໃຊ້ກໍ່ສູງເຖິງ 97% ເມື່ອທຽບກັບກຸ່ມ 1 ທີ່ມີອັດຕາສ່ວນພຽງ 57%. ຢ່າງໃດກໍ່ຕາມ, ກຸ່ມດັ່ງກ່າວນີ້ຍັງມີການເອື່ອຍອີງໃສ່ການເຮັດກະສິກຳສູງ, ເຊິ່ງຄົວເຮືອນທີ່ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳກວມພຽງ 20% ຂອງຄົວເຮືອນທັງໝົດພາຍໃນກຸ່ມ ໃນສົກປີ 2012/13. ຄົວເຮືອນໃນກຸ່ມນີ້ຍັງມີຄວາມສາມາດໃນການເຂົ້າເຖິງທີ່ດິນຫຼາຍກວ່າກຸ່ມອື່ນ, ສະເລ່ຍແລ້ວມີທີ່ດິນປະມານ 2,6 ເຮັກຕາ ຕໍ່ ຄົວເຮືອນ. ຈຸດພິເສດດັ່ງກ່າວນີ້ ໄດ້ເຮັດໃຫ້ຄົວເຮືອນໃນກຸ່ມນີ້ຈຳນວນຫຼາຍສາມາດຜະລິດຜົນລະປູກໄດ້ເກີນດຸນ, ເຊິ່ງເຮັດໃຫ້ເຂົາເຈົ້າກວມອັດຕາສ່ວນສູງທີ່ສຸດໃນຈຳນວນຜູ້ຂາຍເຂົ້າທັງໝົດ, ກວມ 61%. ເຖິງຢ່າງໃດກໍ່ຕາມ, ຜົນຜະລິດຂອງເຂົາເຈົ້າຍັງຕ່ຳເຊິ່ງບໍ່ສາມາດສ້າງກຳໄລໄດ້ຕ່ຳຫຼາຍ ເຊິ່ງເປັນສາເຫດທີ່ເຮັດໃຫ້ເຂົາເຈົ້າຍັງທຸກຍາກ ຫຼື ມີລະດັບການຊີວິດການເປັນຢູ່ທີ່ຕ່ຳ; ຫຼື ເວົ້າອີກຢ່າງໜຶ່ງແມ່ນເຂົາເຈົ້າຕ້ອງມີປະລິມານຜົນຜະລິດໃຫ້ຫຼາຍກວ່ານີ້ຈຶ່ງຈະເຮັດໃຫ້ເຂົາເຈົ້າມີຊີວິດການເປັນຢູ່ທີ່ດີໄດ້.

6. ກຸ່ມທີ່ມີຂະໜາດໃຫຍ່ເປັນອັນດັບສາມແມ່ນປະກອບດ້ວຍຄົວເຮືອນທີ່ອາໄສຢູ່ໃນເຂດຕົວເມືອງທີ່ມີທຶນສະສົມສູງກວ່າກຸ່ມທີ່ຜ່ານມາ ແລະ ສາມາດເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ ແຕ່ຍັງຢູ່ໃນຂະແໜງວຽກງານທີ່ມີຜະລິດຕະພາບຕ່ຳ (ກຸ່ມ3). ຄົວເຮືອນໃນກຸ່ມນີ້ກວມອັດຕາສ່ວນ 17% ຂອງຄົວເຮືອນທັງໝົດທີ່ມີລາຍຮັບຕ່ຳທີ່ສຸດ (ຮູບສະແດງ 1) ແລະ ສ່ວນຫຼາຍອາໄສໃນເຂດຕົວເມືອງ, ເຊິ່ງມີຄົວເຮືອນປະມານ 52% ທີ່ອາໄສຢູ່ໃນເຂດຕົວເມືອງ ແລະ ມີລະດັບການສຶກສາສູງທີ່ສຸດຢູ່ໃນສີ່ກຸ່ມ, 57% ຂອງກຸ່ມມີລະດັບການສຶກສາຊັ້ນມັດທະຍົມຂຶ້ນໄປ. ພ້ອມນັ້ນ, ຄວາມສາມາດໃນການເຂົ້າເຖິງພື້ນຖານໂຄງລ່າງຂອງກຸ່ມນີ້ກໍ່ດີກວ່າກຸ່ມອື່ນ, 99% ຂອງກຸ່ມມີໄຟຟ້າໃຊ້ ແລະ 86% ສາມາດເຂົ້າເຖິງເສັ້ນທາງທີ່ຫຽວໄດ້ທຸກລະດູ. ເກືອບທັງໝົດຂອງກຸ່ມ 3 ເປັນຄົນເຜົ່າລາວ-ໄທ, ເຊິ່ງກວມ 92% ຂອງກຸ່ມ. ສະມາຊິກຂອງຄົວເຮືອນສ່ວນໃຫຍ່ແມ່ນເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ, 78% ຂອງຄົວເຮືອນທັງໝົດໃນກຸ່ມນີ້ແມ່ນມີລາຍຮັບມາຈາກຂະແໜງທີ່ບໍ່ແມ່ນກະສິກຳ. ອັດຕາສ່ວນດັ່ງກ່າວທຽບໃສ່ກຸ່ມກ່ອນໜ້ານີ້ ກໍ່ຄືກຸ່ມ 2, ເຊິ່ງມີອັດຕາສ່ວນພຽງ 20%. ແຕ່ເຖິງວ່າອັດຕາສ່ວນນີ້ ຈະຢູ່ໃນລະດັບທີ່ດີຫຼາຍກໍ່ຕາມ, ຄຸນນະພາບຂອງການຈ້າງງານທີ່ຍັງຕ່ຳ, ຄົວເຮືອນສ່ວນໃຫຍ່ແມ່ນເຮັດວຽກໃນຂະແໜງທີ່ບໍ່ເປັນທາງການທີ່ມີປະສິດທິພາບໃນການຜະລິດຕ່ຳ ເຊິ່ງສ້າງລາຍຮັບບໍ່ສູງ. 47% ຂອງຜູ້ທີ່ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ ແມ່ນເຮັດວຽກທີ່ຕ້ອງໃຊ້ແຮງງານ ແລະ 56% ແມ່ນເຮັດທຸລະກິດສ່ວນຕົວ. ຢ່າງໃດກໍ່ຕາມ, ຄົວເຮືອນເຫຼົ່ານີ້ມັກເຮັດກະສິກຳເປັນອາຊີບເສີມ ນອກຈາກການເຮັດວຽກທີ່ໄດ້ຄ່າຈ້າງ, ມີພຽງ 30% ຂອງຄົວເຮືອນໃນກຸ່ມນີ້ ທີ່ມີລາຍຮັບຈາກຂະແໜງທີ່ບໍ່ແມ່ນກະສິກຳແຕ່ຢ່າງດຽວ. ຢູ່ໃນກຸ່ມນີ້, ຜູ້ທີ່ອາໄສໃນເຂດຊົນນະບົດສ່ວນຫຼວງຫຼາຍເປັນຜູ້ຜະລິດພືດສະບຽງອາຫານທີ່ມີປະລິມານເກີນດຸນ ແລະ ຜູ້ທີ່ອາໄສໃນເຂດຕົວເມືອງສ່ວນໃຫຍ່ແມ່ນເປັນຜູ້ຊື້ຜົນຜະລິດດັ່ງກ່າວ.

7. ກຸ່ມທີ່ມີຂະໜາດນ້ອຍທີ່ສຸດເປັນກຸ່ມທີ່ປະກອບດ້ວຍຄົວເຮືອນທີ່ທຸກຍາກເນື່ອງຈາກບັນຫາທາງສຸຂະພາບ ແລະ ດ້ວຍເຫດນັ້ນຈຶ່ງຖືກກຳນົດດ້ວຍລະດັບຄວາມບອບບາງຂອງຄົວເຮືອນ (ກຸ່ມ 4). ຄົວເຮືອນເຫຼົ່ານີ້ກວມ 13% ຂອງຜູ້ທີ່ມີລາຍຮັບຕ່ຳສຸດ 40% ຂອງປະຊາກອນທັງໝົດ, ເປັນຄົວເຮືອນທີ່ເຮັດກະສິກຳ ຫຼື ເຮັດວຽກໂດຍບໍ່ມີຄ່າຈ້າງ ຫຼື ເຮັດວຽກສ່ວນຕົວ, ເຊິ່ງວຽກທັງໝົດນີ້ແມ່ນໄດ້ຮັບການຄຸ້ມຄອງຈາກປະກັນສັງຄົມທີ່ຈຳກັດ. ໃນກຸ່ມ 4, 58% ຂອງຄົວເຮືອນທັງໝົດແມ່ນມີສະມາຊິກຄົວເຮືອນຢ່າງໜ້ອຍໜຶ່ງຄົນທີ່ເຂົ້າໂຮງໝໍ, 42% ຂອງຄົວເຮືອນທັງໝົດ ມີສະມາຊິກຄົວເຮືອນຢ່າງໜ້ອຍໜຶ່ງຄົນທີ່ເປັນພະຍາດຊໍາເຮື້ອ ແລະ 29% ຕ້ອງໄດ້ກູ້ຢືມເງິນຈາກພາຍນອກ ຫຼື ບໍ່ດັ່ງນັ້ນກໍ່ຕ້ອງໄດ້ຂາຍຊັບສິນ ແລະ/ຫຼື ສັດລ້ຽງເພື່ອມາຈ່າຍຄ່າປິ່ນປົວ. ເຊັ່ນກັນກັບ ກຸ່ມ 1 ແລະ 2, ຄົວເຮືອນໃນກຸ່ມ 4 ໂດຍປົກກະຕິແລ້ວຈະບໍ່ສາມາດເຂົ້າເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ.

ເຖິງວ່າຈະມີການປັບປຸງທາງດ້ານສະຫວັດດີການໃນໝົດທຸກກຸ່ມກໍ່ຕາມ, ແຕ່ຍັງມີຄວາມຄືບໜ້າທີ່ຊັກຊ້າສຳລັບກຸ່ມທີ່ມີຈຸດພິເສດກຳນົດດ້ວຍການເຮັດກະສິກຳທີ່ມີປະສິດທິພາບໃນການຜະລິດຕ່ຳ, ອາໄສຢູ່ເຂດຫ່າງໄກສອກຫຼີກ ແລະ ມີລະດັບການສຶກສາຕ່ຳ

8. ອັດຕາສ່ວນຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກໃນແຕ່ລະກຸ່ມດັ່ງກ່າວ ໃນໄລຍະສິບປີທີ່ຜ່ານມາເຫັນວ່າມີການປ່ຽນແປງ (ຕາຕະລາງ 3). ອັດຕາສ່ວນຂອງຄົວເຮືອນໃນກຸ່ມ 1 ໄດ້ຫຼຸດລົງປະມານ 9% ລະຫວ່າງສົກປີ 2002/03 ແລະ 2012/13, ໃນຂະນະທີ່ອັດຕາສ່ວນຂອງຄົວເຮືອນໃນກຸ່ມ 2 ໄດ້ຫຼຸດລົງ 3% ໃນໄລຍະດຽວກັນ. ສຳລັບອັດຕາສ່ວນຂອງຄົວເຮືອນໃນກຸ່ມ 3 ເຫັນວ່າໄດ້ເພີ່ມຂຶ້ນເກີນສອງເທົ່າ, ເພີ່ມຂຶ້ນຈາກ 8% ໃນສົກປີ 2002/03 ມາເປັນ 17% ໃນສົກປີ 2012/13. ອັດຕາສ່ວນຂອງຄົວເຮືອນໃນກຸ່ມ 4 ເພີ່ມຂຶ້ນ 3% ໃນໄລຍະສິບປີທີ່ຜ່ານມາ, ເຊິ່ງເພີ່ມຂຶ້ນມາເປັນ 13%. ການປ່ຽນແປງທາງດ້ານຂະໜາດຂອງກຸ່ມດັ່ງກ່າວ ໄດ້ສະແດງໃຫ້ເຫັນວ່າ ການເຄື່ອນຍ້າຍຂອງແຮງງານຈາກຂະແໜງກະສິກຳໄປຂະແໜງທີ່ບໍ່ແມ່ນກະສິກຳໃນເຂດຊົນນະບົດ, ກໍ່ຄືຈາກກຸ່ມ 1 ແລະ 2 ມາເປັນ ກຸ່ມ 3 ຍັງບໍ່ທັນພຽງພໍສຳລັບການຫຼຸດຜ່ອນຄວາມທຸກຍາກ ຖ້າແຮງງານທີ່ຍ້າຍໄປເຮັດວຽກໃນຂະແໜງການອື່ນຫາກບໍ່ສາມາດເຮັດວຽກໃນຂະແໜງທີ່ມີປະສິດທິພາບໃນການຜະລິດສູງ. ອັດຕາສ່ວນຂອງຄົວເຮືອນທີ່ທຸກຍາກລົງກວ່າເກົ່າ ຍ້ອນວິກິດທາງດ້ານສຸຂະພາບ ໄດ້ສະທ້ອນໃຫ້ເຫັນວ່າ ຂອງຄົວເຮືອນໃນຂະແໜງທີ່ບໍ່ເປັນທາງການຍັງມີຄວາມບອບບາງ ເນື່ອງຈາກການຄຸ້ມຄອງຂອງປະກັນສຸຂະພາບທີ່ເຂົາເຈົ້າໄດ້ຮັບຍັງຈຳກັດ.

ຕາຕະລາງ 3: ການປ່ຽນແປງຂອງອັດຕາສ່ວນຜູ້ທີ່ມີລາຍຮັບຕ່ຳທີ່ສຸດ 40% ຂອງປະຊາກອນໃນໄລຍະສິບປີທີ່ຜ່ານມາແບ່ງຕາມກຸ່ມ (%)

		2002/03	2012/13
ກຸ່ມ 1	ເຮັດວຽກໃນຂະແໜງກະສິກຳທີ່ມີຜະລິດຕະພາບຕ່ຳ, ອາໄສໃນເຂດຫ່າງໄກສອກຫຼີກ, ມີການສຶກສາຕ່ຳ	51	42
ກຸ່ມ 2	ມີປະສິດທິພາບໃນການຜະລິດຕ່ຳແຕ່ມີຜົນຜະລິດເກີນດຸນ, ອາໄສໃນເຂດຊົນນະບົດທີ່ບໍ່ຫ່າງໄກຫຼາຍ, ມີການສຶກສາຕ່ຳຫາກາງ	31	28
ກຸ່ມ 3	ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ ແລະນອກລະບົບ, ມີຜະລິດຕະພາບ ຕ່ຳ, ອາໄສຢູ່ເຂດຕົວເມືອງ, ມີການສຶກສາໃນລະດັບກາງ	8	17
ກຸ່ມ 4	ພົບວິກິດທາງດ້ານສຸຂະພາບ	10	13

ແຫຼ່ງຂໍ້ມູນ: ການຄົດໄລ່ຂອງທະນາຄານໂລກ ແລະ ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ (LECS) ປະຈຳສົກປີ 2002/03 ແລະ 2012/13.

9. ຜູ້ທີ່ມີລາຍຮັບຕ່ຳທີ່ສຸດໃນສີ່ກຸ່ມດັ່ງກ່າວເຫັນວ່າເປັນສັດເປັນສ່ວນຫຼາຍຂຶ້ນ ແລະ ມີຄວາມແຕກຕ່າງກັນຫຼາຍຂຶ້ນໃນໄລຍະທີ່ຜ່ານມາ. ຕົວຢ່າງ: ກຸ່ມ 1 ໃນປະຈຸບັນ ປະກອບດ້ວຍຄົວເຮືອນທີ່ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ ແລະ ໃຊ້ແຮງງານແລກຄ່າຈ້າງຈຳນວນໜ້ອຍຫຼາຍ ໃນສົກປີ 2012/13 ເມື່ອທຽບກັບສົກປີ 2002/03. ອັນນີ້ແມ່ນຍ້ອນມີແຮງງານທີ່ມີປະສິດພາບຫຼາຍຂຶ້ນ ຫຼື ອີກເຫດຜົນໜຶ່ງແມ່ນຍ້ອນແຮງງານທີ່ເຮັດວຽກໃນອາຊີບທີ່ໄດ້ຄ່າຈ້າງໄດ້ເພີ່ມຂຶ້ນຫຼາຍໃນກຸ່ມ 3, ຫຼື ກາຍມາເປັນຜູ້ທີ່ບໍ່ທຸກຍາກເນື່ອງຈາກກຸ່ມ 1 ໃນປະຈຸບັນນີ້ ແມ່ນປະກອບດ້ວຍຄົວເຮືອນທີ່ມີລາຍຮັບມາຈາກການເຮັດວຽກໃນຂະແໜງທີ່ມີປະສິດທິພາບໃນການຜະລິດຕ່ຳ, ເຮັດວຽກແບບບໍ່ໄດ້ຄ່າຈ້າງ. ໃນສົກປີ 2002/03 ຄົວເຮືອນ 63% ໃນກຸ່ມ 2 ແມ່ນເຮັດວຽກຢູ່ໃນຂະແໜງທີ່ບໍ່ແມ່ນກະສິກຳ ແລະ 52% ໃນຂະແໜງທີ່ໃຊ້ແຮງງານ ແຕ່ຮອດສົກປີ 2012/13 ອັດຕາສ່ວນດັ່ງກ່າວໄດ້ຫຼຸດລົງມາເປັນ 20% ແລະ 13%, ຕາມລຳດັບ, ເຊິ່ງເພີ່ມທະວີການເອື່ອຍອີງໃສ່ຂະແໜງກະສິກຳ (ຕາຕະລາງ 4). ດັ່ງນັ້ນ, ກຸ່ມ 2 ໃນສົກປີ 2012/13 ແມ່ນຜູ້ທີ່ຍັງຫຼັງພາຍຫຼັງການປະຕິຮູບທາງດ້ານໂຄງສ້າງ, ເນື່ອງຈາກຄວາມຫຍຸ້ງຍາກທາງດ້ານການດຳລົງຊີວິດຂອງຄົວເຮືອນໃນເຂດຊົນນະບົດທີ່ສາມາດເຂົ້າເຖິງໂຄງລ່າງໄດ້ຫຼາຍຂຶ້ນ ແຕ່ຍ້ອນລະດັບການສຶກສາຍັງຕ່ຳ ຈຶ່ງເຮັດໃຫ້ການຍ້າຍຈາກຂະແໜງກະສິກຳໄປສູ່ຂະແໜງທີ່ບໍ່ແມ່ນກະສິກຳໃນເຂດຊົນນະບົດພົບຄວາມຫຍຸ້ງຍາກ.

ຕາຕະລາງ 4: ການປ່ຽນແປງທາງດ້ານອັດຕາສ່ວນຄົວເຮືອນໃນແຕ່ລະກຸ່ມ ອີງຕາມປັດໄຈທາງດ້ານການມີທີ່ດິນໃນຄອບຄອງ, ແຫຼ່ງລາຍຮັບ ແລະ ຜົນຜະລິດເຂົ້າທີ່ເກີນດຸນລະຫວ່າງສົກປີ 2002/03 ຫາ 2012/13

	ກຸ່ມ 1		ກຸ່ມ 1		ກຸ່ມ 1		ກຸ່ມ 1	
	2002/03	2012/13	2002/03	2012/13	2002/03	2012/13	2002/03	2012/13
ເນື້ອທີ່ດິນ>2 ຮຕ	18	33	27	41	22	26	27	39
ເນື້ອທີ່ດິນ<0.5 ຮຕ	13	10	14	12	52	42	15	11
ມີລາຍຮັບຈາກຂະແໜງ ບໍ່ແມ່ນກະສິກຳ	13	7	63	20	86	78	32	23
ໄດ້ຮັບຄ່າຈ້າງງານ	12	3	52	13	65	47	29	15
ຂາຍເຂົ້າ	73	50	77	61	54	53	71	51

ແຫຼ່ງຂໍ້ມູນ: ການຄົດໄລ່ຂອງທະນາຄານໂລກ ແລະ ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ (LECS) ປະຈຳສົກປີ 2002/03 ແລະ 2012/13

10. ການມີທີ່ດິນປູກຝັງໂດຍລວມເຫັນວ່າໄດ້ເພີ່ມຂຶ້ນໃນທຸກກຸ່ມ ແລະ ບໍ່ແມ່ນຂໍ້ຈຳກັດຕົ້ນຕໍສຳລັບຜູ້ທຸກຍາກສ່ວນໃຫຍ່. ອັດຕາສ່ວນຂອງຄົວເຮືອນທີ່ບໍ່ມີດິນປູກຝັງ ຫຼື ມີດິນປູກຝັງໜ້ອຍກວ່າ 0,5 ເຮັກຕາ (ຮຕ) ຢູ່ໃນແຕ່ລະກຸ່ມ ແຕ່ສົກປີ 2002/03 ຫາ ສົກປີ 2012/13 ໄດ້ຫຼຸດລົງ, ໃນຂະນະທີ່ອັດຕາສ່ວນຂອງຄົວເຮືອນທີ່ມີດິນປູກຝັງ 2 ຮຕ ຂຶ້ນໄປໄດ້ເພີ່ມຂຶ້ນ, ໂດຍສະເພາະໃນກຸ່ມ 1 ແລະ 2. ຄົວເຮືອນໃນກຸ່ມ 1 ທີ່ມີດິນ 2 ຮຕ ຂຶ້ນໄປໄດ້ເພີ່ມຂຶ້ນຈາກ 18% ໃນສົກປີ 2002/03 ມາເປັນ 33% ໃນສົກປີ 2012/13, ໃນຂະນະທີ່ຄົວເຮືອນໃນກຸ່ມ 2 ທີ່ມີດິນ 2 ຮຕ ຂຶ້ນໄປໄດ້ເພີ່ມຂຶ້ນຈາກ 27% ມາເປັນ 41% ໃນໄລຍະດຽວກັນ. ຄົວເຮືອນທີ່ມີທີ່ດິນກ້ວ້າງກວ່າໄດ້ເພີ່ມຄວາມສາມາດໃນການເຂົ້າເຖິງທີ່ດິນໄດ້ໄວກວ່າຄົວເຮືອນທີ່ບໍ່ມີດິນປູກຝັງ ຫຼື ມີທີ່ດິນໜ້ອຍກວ່າ 0,5 ຮຕ, ເຊິ່ງສົ່ງຜົນໃຫ້ການແຈກຢາຍຂອງ ຈຳນວນຜູ້ທີ່ມີລາຍຮັບຕ່ຳສຸດ 40% ອີງໃສ່ທີ່ດິນປູກຝັງບໍ່ເທົ່າກັນ.

11. ເງື່ອນໄຂການດຳລົງຊີວິດໂດຍລວມແມ່ນໄດ້ຮັບການປັບປຸງໃຫ້ດີຂຶ້ນ, ເຫັນໄດ້ຈາກຊັບສິນທີ່ຄົວເຮືອນເປັນເຈົ້າຂອງໄດ້ເພີ່ມຂຶ້ນ ພ້ອມນັ້ນສະພາບທີ່ພັກອາໄສ ແລະ ສິ່ງອຳນວຍຄວາມສະດວກກໍ່ໄດ້ຮັບການປັບປຸງເຊັ່ນກັນ. ຢູ່ໃນກຸ່ມ 1, ອັດຕາສ່ວນຂອງຄົວເຮືອນທີ່ມີລົດຈັກ ໄດ້ເພີ່ມຂຶ້ນຈາກພຽງແຕ່ 1% ໃນສົກປີ 2002/03 ມາເປັນ 50% ໃນສົກປີ 2012/13, ໃນຂະນະທີ່ຄົວເຮືອນທີ່ມີໂທລະທັດໄດ້ເພີ່ມຂຶ້ນຈາກ 3% ມາເປັນ 22% ໃນໄລຍະດຽວກັນ. ໃນກຸ່ມ 2 ແລະ 3, ມາຮອດສົກປີ 2012/13 ເຫັນວ່າອັດຕາສ່ວນຂອງຄົວເຮືອນທີ່ມີຊັບສິນທີ່ມີອາຍຸໃຊ້ງານ ເປັນຕົ້ນລົດໃຫຍ່, ລົດຈັກ, ຕູ້ເຢັນ ແລະ ໂທລະທັດ, ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍເມື່ອທຽບໃສ່ສົກປີ 2002/03. ຕົວຢ່າງ: ຄົວເຮືອນໃນກຸ່ມ 2 ທີ່ມີລົດຈັກ ໄດ້ເພີ່ມຂຶ້ນຈາກ 8% ມາເປັນ 80%, ໃນຂະນະທີ່ຄົວເຮືອນທີ່ມີໂທລະທັດໄດ້ເພີ່ມຂຶ້ນຈາກ

ຮູບສະແດງ 2: ອັດຕາການປ່ຽນແປງຂອງຄົວເຮືອນອີງຕາມຊັບສິນທີ່ມີອາຍຸການໃຊ້ງານ, ສະພາບຂອງທີ່ພັກອາໄສ ແລະ ການນຳໃຊ້ເຊື້ອໄຟໃນການແຕ່ງກິນລະຫວ່າງສົກປີ 2002/03 ຫາສົກປີ 2012/13





ແຫຼ່ງຂໍ້ມູນ: ການຄົດໄລ່ຂອງທະນາຄານໂລກ ແລະ ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ (LECS) ປະຈຳສົກປີ 2002/03 ແລະ 2012/13.

42% ມາເປັນ 90%. ເຊັ່ນກັນ, ອັດຕາສ່ວນຂອງຄົວເຮືອນໃນກຸ່ມ 3 ທີ່ມີລົດຈັກໄດ້ເພີ່ມຂຶ້ນຈາກ 52% ມາເປັນ 92%. ຢ່າງໃດກໍ່ຕາມ, ການເພີ່ມຂຶ້ນຂອງອັດຕາສ່ວນຄົວເຮືອນທີ່ມີຊັບສິນປະເພດນີ້ໃນກຸ່ມ 1 ຍັງຊ້າກວ່າກຸ່ມອື່ນ.

12. ເງື່ອນໄຂການດຳລົງຊີວິດຂອງແຕ່ລະກຸ່ມເຫັນວ່າດີຂຶ້ນບໍ່ທ່ຽງ. ໃນຂະນະທີ່ກຸ່ມ 2 ແລະ 3 ມີເງື່ອນໄຂການດຳລົງຊີວິດໄດ້ຮັບການປັບປຸງດີຂຶ້ນຫຼາຍ, ແຕ່ການປັບປຸງ ເງື່ອນໄຂການດຳລົງຊີວິດຂອງຄົວເຮືອນໃນກຸ່ມ 1 ຍັງຊັກຊ້າ. ຄົວເຮືອນໃນກຸ່ມ 1 ສ່ວນໃຫຍ່, 96% ຂອງຄົວເຮືອນພາຍໃນກຸ່ມ ແມ່ນອາໄສໃນບ້ານທີ່ມີຝາບໍ່ແຂງແຮງ. ແຕ່ຄົວເຮືອນໃນກຸ່ມ 2 ທີ່ອາໄສໃນບ້ານທີ່ມີຝາແຂງແຮງໄດ້ເພີ່ມຂຶ້ນເຖິງຫົກເທົ່າ, ເພີ່ມຈາກ 4% ໃນສົກປີ 2002/03 ມາເປັນ 26% ໃນສົກປີ 2012/13, ໃນຂະນະທີ່ຄົວເຮືອນໃນກຸ່ມ 3 ທີ່ອາໄສໃນບ້ານທີ່ມີຝາແຂງແຮງໄດ້ເພີ່ມຂຶ້ນໜຶ່ງສ່ວນສາມ, ເພີ່ມຂຶ້ນຈາກ 49% ໃນສົກປີ 2002/03 ມາເປັນ 67% ໃນສົກປີ 2012/13. ການນຳໃຊ້ວິດຖ່າຍທີ່ໄດ້ຮັບການປັບປຸງກໍ່ເພີ່ມຂຶ້ນໃນທຸກກຸ່ມ. ຄົວເຮືອນຈຳນວນຫຼວງຫຼາຍໃນກຸ່ມ 3 ໄດ້ນຳໃຊ້ວິດຖ່າຍທີ່ໄດ້ຮັບການປັບປຸງ, ກວມອັດຕາສ່ວນ 93% ຂອງຄົວເຮືອນທັງໝົດຢູ່ພາຍໃນກຸ່ມ ໃນສົກປີ 2012/13, ໃນຂະນະທີ່ຄົວເຮືອນໃນກຸ່ມ 2 ແລະ 4 ທີ່ນຳໃຊ້ວິດຖ່າຍທີ່ໄດ້ຮັບການປັບປຸງກໍ່ມີການເພີ່ມຂຶ້ນຢ່າງຈະແຈ້ງ. ອັດຕາການນຳໃຊ້ວິດຖ່າຍທີ່ໄດ້ຮັບການປັບປຸງຂອງກຸ່ມ 2 ໄດ້ເພີ່ມຂຶ້ນຈາກ 37% ມາເປັນ 77%, ໃນຂະນະທີ່ອັດຕາການນຳໃຊ້ຂອງກຸ່ມ 4 ໄດ້ເພີ່ມຂຶ້ນຈາກ 13% ມາເປັນ 46%. ໃນຂະນະທີ່ມີພຽງ 21% ຂອງຄົວເຮືອນໃນກຸ່ມ 1 ທີ່ນຳໃຊ້ວິດຖ່າຍທີ່ໄດ້ຮັບການປັບປຸງໃນສົກປີ 2012/13, ສະແດງວ່າເພີ່ມຂຶ້ນພຽງແຕ່ 4% ນັບແຕ່ສົກປີ 2002/03ເປັນຕົ້ນມາ. ເຖິງວ່າຄົວເຮືອນກຸ່ມ ຈະມີອັດຕາການນຳໃຊ້ວິດຖ່າຍ ແລະ ມີການປັບປຸງສະພາບທີ່ພັກທີ່ຊ້າກວ່າກຸ່ມອື່ນ, ແຕ່ໂດຍລວມເຫັນວ່າການປັບປຸງຊີວິດການເປັນຢູ່ຂອງຄົວເຮືອນໃນກຸ່ມ 1 ກໍ່ບໍ່ໄດ້ຊ້າ. ສິ່ງດັ່ງກ່າວໄດ້ສະແດງໃຫ້ເຫັນຈາກຄວາມແຕກຕ່າງຂອງອັດຕາຄວາມທຸກຍາກສຳລັບກຸ່ມນີ້. ເຖິງວ່າອັດຕາຄວາມທຸກຍາກທີ່ຮ້າຍແຮງ ຂອງຄົວເຮືອນໃນກຸ່ມນີ້ໄດ້ຫຼຸດລົງຢ່າງຫຼວງຫຼາຍ, ແຕ່ກໍ່ບໍ່ໄດ້ເຮັດໃຫ້ອັດຕາຄວາມທຸກຍາກລວມຂອງກຸ່ມ 1 ຫຼຸດລົງຫຼາຍ ເມື່ອທຽບໃສ່ຂະໜາດຂອງກຸ່ມ (ຮູບສະແດງ 3). ໃນຂະນະທີ່ກຸ່ມ 1 ກວມອັດຕາສ່ວນເຄິ່ງໜຶ່ງຂອງຜູ້ທີ່ທຸກຍາກ ແລະ ໃກ້ຄວາມທຸກຍາກທັງໝົດໃນສົກປີ 2002/03, ການຫຼຸດລົງຂອງອັດຕາຄວາມທຸກຍາກຂອງຄົວເຮືອນໃນກຸ່ມນີ້ປະກອບສ່ວນເຮັດໃຫ້ອັດຕາຄວາມທຸກຍາກລວມຫຼຸດລົງ 37%.

13. ບັນຫາການສຶກສາຍັງເປັນຂໍ້ຈຳກັດຕົ້ນຕໍ, ໂດຍສະເພາະສຳລັບ ຄົວເຮືອນທີ່ຢູ່ໃນເຂດຫ່າງໄກສອກຫຼີກ. ການປັບປຸງທາງດ້ານການສຶກສາຍັງບໍ່ທັນສູງຫຼາຍໃນໄລຍະສິບປີຜ່ານມາ, ຄົວເຮືອນສ່ວນຫຼາຍແມ່ນມີການສຶກສາໃນຊັ້ນປະຖົມ ແຕ່ການສຶກສາໃນຊັ້ນມັດທະຍົມ ຍັງມີໜ້ອຍ. ລະດັບການສຶກສາຂອງຄົວເຮືອນໃນກຸ່ມ 1 ໃນໄລຍະຜ່ານມາໄດ້ມີການປັບປຸງດີຂຶ້ນຫຼາຍ, ເຫັນໄດ້ຈາກອັດຕາສ່ວນຂອງຄົວເຮືອນທີ່ມີລະດັບການສຶກສາຕ່ຳກວ່າຊັ້ນປະຖົມໄດ້ຫຼຸດລົງ ແລະ ອັດຕາສ່ວນຂອງຄົວເຮືອນ ທີ່ມີລະດັບການສຶກສາຈົບຊັ້ນປະຖົມໄດ້ເພີ່ມຫຼາຍຂຶ້ນ (ຮູບສະແດງ 3). ອັດຕາສ່ວນຂອງຄົວເຮືອນທີ່ມີລະດັບການສຶກສາຕ່ຳກວ່າຊັ້ນປະຖົມໄດ້ຫຼຸດລົງຈາກ 79% ມາເປັນ 65%, ໃນຂະນະທີ່ອັດຕາສ່ວນຂອງຄົວເຮືອນທີ່ມີລະດັບການສຶກສາຈົບຊັ້ນປະຖົມໄດ້ເພີ່ມຈາກ 15% ມາເປັນ 28% ໃນໄລຍະ ສິບປີທີ່ຜ່ານມາ. ແຕ່ຢ່າງໃດກໍ່ຕາມ, ອັດຕາການເພີ່ມຂຶ້ນຂອງລະດັບການສຶກສາຢູ່ໃນຊັ້ນຮຽນອື່ນຂອງກຸ່ມອື່ນເຫັນວ່າຍັງບໍ່ທັນມີຫຼາຍ, ການຍົກລະດັບການສຶກສາຈາກຊັ້ນປະຖົມໄປເປັນຊັ້ນມັດທະຍົມເປັນສິ່ງທ້າທາຍຫຼາຍສຳລັບໝົດທຸກກຸ່ມ. ຄວາມຈິງແລ້ວ, ຖ້າຍົກເວັ້ນກຸ່ມ 3, ສະມາຊິກຄົວເຮືອນສ່ວນໃຫຍ່ໃນສາມກຸ່ມທີ່ຍັງເຫຼືອຖ້າບໍ່ໄດ້ເຂົ້າໂຮງຮຽນ ກໍ່ແມ່ນຮຽນຍັງບໍ່ຈົບຊັ້ນປະຖົມ ຫຼື ຮຽນຮອດແຕ່ຊັ້ນປະຖົມ. ແຕ່ອັດຕາສ່ວນຂອງຄົວເຮືອນທີ່ມີລະດັບການສຶກສາສູງກວ່າຊັ້ນປະຖົມໄດ້ມີການປ່ຽນແປງໃນໄລຍະສົກປີ 2002/03 ຫາ 2012/13. ໂດຍສະເລ່ຍແລ້ວ ເຫັນວ່າສະມາຊິກຄົວເຮືອນສ່ວນໃຫຍ່ທີ່ມີການສຶກສາໃນກຸ່ມ 3 ແມ່ນໄດ້ຮັບການສຶກສາ 7 ປີ, ໃນຂະນະທີ່ສະມາຊິກຄົວເຮືອນໃນກຸ່ມ 1 ທີ່ມີການສຶກສາສ່ວນໃຫຍ່ ແມ່ນໄດ້ຮັບການສຶກສາ 3 ປີ.

ຮູບສະແດງ 3: ການປະກອບສ່ວນຂອງແຕ່ລະກຸ່ມໃນການຫຼຸດຜ່ອນຄວາມທຸກຍາກ



ແຫຼ່ງຂໍ້ມູນ: ການຄິດໄລ່ຂອງທະນາຄານໂລກ ແລະ ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ (LECS) ປະຈຳສົກປີ 2002/03 ແລະ 2012/13.

ຮູບສະແດງ 4: ອັດຕາສ່ວນຂອງສະມາຊິກຄົວເຮືອນໃນເກນອາຍຸເຮັດວຽກແບ່ງຕາມລະດັບການສຶກສາ (%)



ແຫຼ່ງຂໍ້ມູນ: ການຄົດໄລ່ຂອງທະນາຄານໂລກ ແລະ ການສຳຫຼວດລາຍຈ່າຍ ແລະ ການຊົມໃຊ້ (LECS) ປະຈຳສົກປີ 2002/03 ແລະ 2012/13.

III ຄວາມໝາຍຄວາມສຳຄັນທາງດ້ານນະໂຍບາຍ

ຂໍ້ຈຳກັດຫຼາຍອັນທີ່ພົ້ນເດັ່ນກໍ່ຄືສິ່ງກີດຂວາງຕົ້ນຕໍທີ່ເຮັດໃຫ້ບໍ່ສາມາດຫຼຸດພົ້ນຈາກຄວາມທຸກຍາກ. ໂດຍທົ່ວໄປແລ້ວ, ເຖິງວ່າບັນຫາທາງດ້ານທີ່ດິນຈະບໍ່ແມ່ນຂໍ້ຈຳກັດຕົ້ນຕໍສຳລັບຄົວເຮືອນໃນການຫຼຸດພົ້ນອອກຈາກຄວາມທຸກຍາກແລ້ວກໍ່ຕາມ, ຄຸນນະພາບຂອງການໃຫ້ບໍລິການພາກລັດທີ່ຍັງບໍ່ທັນໄດ້ດີ ເປັນຕົ້ນແມ່ນດ້ານການສຶກສາ ແລະ ການເພີ່ມຄວາມສາມາດໃນການເຂົ້າເຖິງໂຄງລ່າງ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ ຍັງເປັນຂໍ້ຈຳກັດອັນໃຫຍ່ຫຼວງ. ຂໍ້ຈຳກັດອີກອັນໜຶ່ງແມ່ນຜົນຜະລິດກະສິກຳທີ່ມີໜ້ອຍຫຼາຍ ຈຶ່ງເປັນການຍາກທີ່ຈະສ້າງຜົນກຳໄລໃຫ້ແກ່ຄົວເຮືອນທີ່ທຸກຍາກທີ່ອາໄສການເຮັດວຽກໃນຂະແໜງກະສິກຳທີ່ມີປະສິດທິພາບຕ່ຳ, ລວມທັງບັນດາຄົວເຮືອນທີ່ສາມາດສ້າງຜົນຜະລິດເກີນດຸນ. ສ່ວນຄົວເຮືອນທີ່ສາມາດຍ້າຍອອກຈາກຂະແໜງກະສິກຳມາເປັນຂະແໜງທີ່ບໍ່ແມ່ນກະສິກຳໃນເຂດຊົນນະບົດ, ມີປະສິດທິພາບໃນການຜະລິດຕ່ຳ ສິ່ງດັ່ງກ່າວມັນໄດ້ເພີ່ມທະວີຂໍ້ຈຳກັດໃຫ້ແກ່ການຫຼຸດພົ້ນອອກຈາກຄວາມທຸກຍາກ. ບັນຫາສຸດທ້າຍ ແມ່ນບັນຫາທາງດ້ານສຸຂະພາບທີ່ຮ້າຍແຮງ ເຊິ່ງເປັນຂໍ້ຈຳກັດອີກອັນໜຶ່ງທີ່ສຳຄັນ.

14. ຂ້າງລຸ່ມນີ້ (ຕາຕະລາງ5) ແມ່ນການສະຫຼຸບພາບລວມຂອງປະຊາກອນທີ່ເປັນເປົ້າໝາຍໃນແຕ່ລະກຸ່ມ (ລວມທັງຊົນເຜົ່າ ແລະ ທີ່ຕັ້ງ) ແລະ ຂໍ້ຈຳກັດຕົ້ນຕໍ. ລະດັບຄວາມສຳຄັນຂອງຂໍ້ຈຳກັດເຫຼົ່ານີ້ແມ່ນແຕກຕ່າງກັນ, ເຊິ່ງຮຽກຮ້ອງໃຫ້ມີນະໂຍບາຍແກ້ໄຂສະເພາະສຳລັບແຕ່ລະກຸ່ມ.

ຕາຕະລາງ 5: ສັງລວມນະໂຍບາຍແກ້ໄຂຄວາມທຸກຍາກ

ກຸ່ມ	ປະຊາກອນທີ່ເປັນເປົ້າໝາຍ	ຂໍ້ຈຳກັດໂດຍຫຍໍ້
ກຸ່ມ 1: ສ່ວນໃຫຍ່ແມ່ນເຮັດວຽກໃນຂະແໜງກະສິກຳທີ່ມີປະສິດທິພາບໃນການຜະລິດຕ່ຳ, ອາໄສໃນເຂດຫ່າງໄກສອກຫຼີກ, ມີການສຶກສາຕ່ຳ	ສ່ວນໃຫຍ່ແມ່ນເປັນຄົນຊົນເຜົ່າກຸ່ມນ້ອຍ ຢູ່ເຂດຊົນນະບົດທີ່ຫ່າງໄກສອກຫຼີກ, ສ່ວນຫຼາຍອາໄສໃນເຂດພູດອຍ	- ຍ້ອນຄວາມຫ່າງໄກສອກຫຼີກ ແລະ ຫ່າງໄກຈາກຜູ້ຄົນ, ເຮັດໃຫ້ໄດ້ຮັບການບໍລິການຈາກພາກລັດທີ່ມີຄຸນນະພາບຕ່ຳ - ຄວາມສາມາດໃນການເຂົ້າເຖິງການສຶກສາຊັ້ນມັດທະຍົມຍັງຕ່ຳ - ປະສິດທິພາບໃນການຜະລິດກະສິກຳຕ່ຳ
ກຸ່ມ 2: ສ່ວນໃຫຍ່ແມ່ນມີປະສິດທິພາບໃນການຜະລິດຕ່ຳ ແຕ່ມີຜົນຜະລິດເກີນດຸນ, ອາໄສໃນເຂດຫ່າງໄກແຕ່ບໍ່ໄກຫຼາຍ, ມີການສຶກສາ ຕ່ຳຫາກາງ, ບໍ່ສາມາດເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້ເທື່ອ	ສ່ວນໃຫຍ່ແມ່ນ ເຜົ່າລາວ-ໄທ ທີ່ອາໄສໃນເຂດຊົນນະບົດ, ມີທີ່ດິນໃນເຂດທົ່ງພຽງ	- ມີລາຍໄດ້ຈາກການຂາຍຜົນລະປູກຕ່ຳຫຼາຍ - ອັດຕາການຈົບຊັ້ນມັດທະຍົມມີໜ້ອຍຫຼາຍ
ກຸ່ມ 3: ສ່ວນໃຫຍ່ແມ່ນເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳທີ່ບໍ່ເປັນທາງການ ແລະ ມີປະສິດທິພາບໃນການຜະລິດຕ່ຳ, ອາໄສຢູ່ເຂດຕົວເມືອງ, ມີການສຶກສາ ໃນລະດັບກາງ.	ເຜົ່າລາວ-ໄທເກືອບທັງໝົດ ທີ່ອາໄສໃນເຂດຕົວເມືອງ ແລະ ຊົນນະບົດ, ຢູ່ເຂດທົ່ງພຽງ	ມີປະສິດທິພາບໃນການຜະລິດຕ່ຳໃນຂະແໜງທີ່ບໍ່ແມ່ນກະສິກຳ ເຊິ່ງເປັນຂະແໜງທີ່ບໍ່ເປັນທາງການ, ຂາດທັກສະ
ກຸ່ມ 4: ພົບວິກິດທາງດ້ານສຸຂະພາບ	ປະຊາຊົນໃນທົ່ວປະເທດ ໂດຍສະເພາະແມ່ນຜູ້ທີ່ເຮັດວຽກໃນຂະແໜງກະສິກຳທີ່ບໍ່ເປັນທາງການ ກໍ່ຄືຂະແໜງທີ່ບໍ່ແມ່ນກະສິກຳ	ຂາດແຄນປະກັນສຸຂະພາບ ແລະ ປະກັນສັງຄົມທີ່ຄົບຖ້ວນພຽງພໍ

ແຫຼ່ງຂໍ້ມູນ: ພະນັກງານຂອງທະນາຄານໂລກ

15. ກຸ່ມ 1: ສ່ວນໃຫຍ່ແມ່ນເຮັດວຽກໃນຂະແໜງກະສິກຳທີ່ມີປະສິດທິພາບໃນການຜະລິດຕ່ຳ, ອາໄສໃນເຂດຫ່າງໄກສອກຫຼີກ, ມີການສຶກສາຕ່ຳ. ກຸ່ມນີ້ແມ່ນຕ້ອງມີນະໂຍບາຍຢ່າງມີຈຸດສຸມ ເພື່ອຊຸກຍູ້ການເຊື່ອມໂຍງທາງດ້ານເສດຖະກິດ ແລະ ເປັນນະໂຍບາຍສະເພາະທີ່ເໝາະສົມກັບສະພາບຈຸດພິເສດຂອງກຸ່ມ—ເນື່ອງຈາກຄົວເຮືອນໃນກຸ່ມນີ້ສ່ວນຫຼາຍແມ່ນອາໄສໃນເຂດຫ່າງໄກສອກຫຼີກ ແລະ ເປັນຄົນຊົນເຜົ່າກຸ່ມນ້ອຍ. ນະໂຍບາຍແກ້ໄຂອັນຮີບດ່ວນທີ່ສຸດແມ່ນຕ້ອງສຸມໃສ່ການເພີ່ມທະວີການສະ ໜອງການສຶກສາ ແລະ ເພີ່ມອັດຕາ

ການຮຽນຈົບຊັ້ນມັດທະຍົມຢູ່ໃນເຂດຫ່າງໄກສອກຫຼີກ ແລະ ມີອັດຕາຄວາມ ໜາແໜ້ນຂອງປະຊາກອນຕ່ຳ. ເພື່ອບັນລຸໄດ້ຕາມຈຸດ ປະສົງດັ່ງກ່າວ ຕ້ອງເຮັດໃຫ້ໂຮງຮຽນສາມາດເຂົ້າເຖິງໄດ້ງ່າຍຂຶ້ນ, ຕົວຢ່າງ: ສະໜອງພາຫະນະ, ທຶນການສຶກສາສຳລັບການເດີນທາງ ໄປໂຮງຮຽນ ແລະ ປັບປຸງການເຂົ້າເຖິງໂຮງຮຽນ ໂດຍການລົງທຶນໃສ່ການສ້າງທາງໄປຫາໂຮງຮຽນ. ນອກຈາກການແກ້ໄຂບັນຫາ ທາງດ້ານເສັ້ນທາງແລ້ວ, ຍັງຈະຕ້ອງໄດ້ເພີ່ມທະວີການສະໜອງໄຟຟ້າ ເປັນຕົ້ນແມ່ນການແກ້ໄຂດ້ວຍການໃຊ້ໄຟຟ້ານອກລະບົບ. ການລົງທຶນສ້າງໂຄງລ່າງໃນຊົນນະບົດ ເປັນຕົ້ນການສ້າງເສັ້ນທາງ ແລະ ໂຄງລ່າງທາງດ້ານໄຟຟ້າ ຈະເພີ່ມການເຊື່ອມໂຍງ ແລະ ຊຸກຍູ້ ການເຊື່ອມໂຍງທາງດ້ານເສດຖະກິດ, ເປີດໂອກາດໃຫ້ຄົວເຮືອນໄດ້ຮັບໂອກາດໃໝ່ໆ. ຄົວເຮືອນສ່ວນໃຫຍ່ໃນກຸ່ມນີ້ແມ່ນເຮັດກະສິກຳ ເປັນພື້ນຖານ ແລະ ຍັງຈະສືບຕໍ່ເອື່ອຍອີງໃສ່ກະສິກຳໃນໄລຍະຍາວ ເນື່ອງຈາກລະດັບການສຶກສາຂອງເຂົາເຈົ້າຍັງຈຳກັດ. ດ້ວຍເຫດນັ້ນ, ນະໂຍບາຍທີ່ຊ່ວຍຍົກລະດັບປະສິດທິພາບໃນການຜະລິດກະສິກຳ—ໂດຍສະເພາະແມ່ນການບໍລິການຈາກສູນສະໜອງຄວາມຮູ້ ແລະ ຂະຫຍາຍແນວພັນ ເຊິ່ງຈະຊ່ວຍຊຸກຍູ້ການນຳໃຊ້ວິທີການຜະລິດ ແລະ ພືດທີ່ມີປະສິດທິພາບ (ໂດຍສະເພາະແມ່ນການປູກພືດທີ່ບໍ່ ແມ່ນເຂົ້າ ແລະ ການລ້ຽງສັດ) ເຂົ້າໃນຮູບແບບໂຄງສ້າງສະເພາະ ແລະ ຄວາມຕ້ອງການວັດທະນະທຳ—ຈະເປັນເຄື່ອງມືໃນການນຳພາ ເຂົາເຈົ້າອອກຈາກຄວາມທຸກຍາກ.

16. ກຸ່ມ 2: ສ່ວນໃຫຍ່ແມ່ນມີປະສິດທິພາບໃນການຜະລິດຕ່ຳແຕ່ມີຜົນຜະລິດເກີນດຸນ, ອາໄສໃນເຂດຫ່າງໄກແຕ່ບໍ່ໄກຫຼາຍ, ມີລະດັບ ການສຶກສາຕ່ຳຫາກາງ, ບໍ່ສາມາດເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳໄດ້ເທື່ອ. ບາງຄົວເຮືອນໃນກຸ່ມນີ້ມີໂອກາດສູງໃນການຍ້າຍ ອອກຈາກຂະແໜງກະສິກຳ ພ້ອມທັງມີການລົງທຶນໃສ່ການສຶກສາເພື່ອເພີ່ມອັດຕາການຈົບຊັ້ນມັດທະຍົມຕອນຕົ້ນ ແລະ ຕອນ ປາຍ. ແຕ່ຄົວເຮືອນສ່ວນໃຫຍ່ຍັງເຮັດວຽກຢູ່ໃນຂະແໜງກະສິກຳ ແລະ ໄດ້ປະໂຫຍດຈາກນະໂຍບາຍການເພີ່ມລາຍຮັບຈາກຜົນ ຜະລິດກະສິກຳ, ໂດຍສະເພາະແມ່ນການຜະລິດເຂົ້າ. ຈະເຮັດໄດ້ຄືແນວນັ້ນ ຕ້ອງຫຼຸດຜ່ອນຕົ້ນທຶນດ້ານການຕະຫຼາດ ໂດຍການລົງທຶນ ຂອງລັດທີ່ກ່ຽວຂ້ອງ ແລະ ການປັບປຸງລະບຽບການໃຫ້ດີກວ່າເກົ່າ, ແລະ ສະໜັບສະໜຸນນະໂຍບາຍການເປີດກວ້າງກວ້າງທາງດ້ານ ການຄ້າ ເພື່ອເພີ່ມລາຄາຂອງສິນຄ້າກະສິກຳ ເປັນຕົ້ນລາຄາຂອງສິ່ງທີ່ປະກອບເຂົ້າໃນການຜະລິດ ແລະ ການເພີ່ມຄວາມສາມາດໃນການ ສ້າງຜົນກຳໄລຂອງການຜະລິດກະສິກຳ. ການທີ່ຄົວເຮືອນສ່ວນໃຫຍ່ໃນກຸ່ມນີ້ອາໄສໃນເຂດຫ່ຽງ, ການກຳນົດນະໂຍບາຍຕ່າງໆອາດ ຈະສາມາດສຸມໃສ່ການເພີ່ມການຜະລິດເຂົ້າ ແລະ ການເຊື່ອມໂຍງກັບຊາວກະສິກອນທີ່ເປັນຜູ້ຜະລິດຂະໜາດນ້ອຍເຂົ້າໃນຕ່ອງໂສ້ ການຜະລິດສະບຽງອາຫານ. ພ້ອມນັ້ນ ກໍ່ອາດຈະສຸມໃສ່ການເພີ່ມທະວີລະບົບການປູກຝັງທີ່ມີເຂົ້າເປັນພື້ນຖານໃຫ້ມີຄວາມຫຼາກຫຼາຍ ເພື່ອປູກພືດຫຼາຍໆຊະນິດ ເປັນຕົ້ນການປູກເຂົ້າປະສົມກັບການປູກຜັກ ຫຼື ການປູກເຂົ້າປະສົມກັບການລ້ຽງສັດນ້ຳ. ເພື່ອເຮັດໄດ້ຄືດັ່ງກ່າວ ຈະຕ້ອງໄດ້ປັບປຸງແນວພັນ ແລະ ປ່ຽໃຫ້ມີຄຸນນະພາບເພື່ອເຮັດໃຫ້ຜົນລະປູກເຕີບໃຫຍ່ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການຄົ້ນຄວ້າ ແລະ ການບໍລິການສະໜອງຄວາມຮູ້; ຂະຫຍາຍລະບົບຊົນລະປະທານ; ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງນ້ຳແບບມີສ່ວນ ຮ່ວມ; ແລະ ສົ່ງເສີມອົງການຈັດຕັ້ງຂອງຊາວກະສິກອນ ແລະ ຮ່ວມມືກັບພາກເອກະຊົນ, ໃນຂະນະທີ່ການລົງທຶນໃສ່ການສ້າງໂຄງ ລ່າງສຳລັບຮັບໃຫ້ແກ່ຄວາມປອດໄພຂອງສະບຽງອາຫານກໍ່ເປັນສິ່ງໜຶ່ງທີ່ເປັນປະໂຫຍດຫຼາຍ.

17. ກຸ່ມ 3: ສ່ວນໃຫຍ່ແມ່ນເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳທີ່ບໍ່ເປັນທາງການ ແລະ ມີປະສິດທິພາບໃນການຜະລິດຕ່ຳ, ອາໄສຢູ່ເຂດຕົວເມືອງ, ມີການສຶກສາໃນລະດັບກາງ. ທິດທາງໃນການຫຼຸດພົ້ນອອກຈາກຄວາມທຸກຍາກສຳລັບຄົວເຮືອນໃນກຸ່ມນີ້ແມ່ນ ການຍ້າຍອອກຈາກການມີອາຊີບທີ່ໃຊ້ສີມືຂັ້ນຕ່ຳ ແລະ ປະສິດທິພາບໃນການຜະລິດຕ່ຳມາເຮັດວຽກໃນອາຊີບທີ່ດີກວ່າໃນຂະແໜງທີ່ບໍ່ ແມ່ນກະສິກຳ. ໃນການວາງນະໂຍບາຍອາດຈະສຸມໃສ່ການຫຼຸດຜ່ອນຕົ້ນທຶນໃນການເຮັດທຸລະກິດເພື່ອຊຸກຍູ້ການຂະຫຍາຍຕົວ ແລະ ການຈ້າງງານຢູ່ໃນຂະແໜງອຸດສາຫະກຳປຸງແຕ່ງ, ຄຽງຄູ່ກັນນັ້ນ ກໍ່ຕ້ອງວາງນະໂຍບາຍຍົກລະດັບປະສິດທິພາບຂອງການຜະລິດ ໂດຍການສະໜອງການສຶກສາ ແລະ ການຝຶກອົບຮົມ, ນະໂຍບາຍເຫຼົ່ານີ້ ຈະເປັນປະໂຫຍດຫຼາຍສຳລັບຄົວເຮືອນໃນກຸ່ມນີ້. ແກ້ໄຂບັນ ຫາການຂາດສີມືແຮງງານຢູ່ໃນກຸ່ມນີ້ ໂດຍການສະໜອງການຝຶກອົບຮົມທາງດ້ານວິຊາຊີບທີ່ກ່ຽວຂ້ອງການອາຊີບຂອງເຂົາເຈົ້າ, ເຊິ່ງຈະ ຕ້ອງໄດ້ປຶກສາຫາລືຮ່ວມກັບພາກເອກະຊົນ; ພ້ອມນັ້ນ ການສະໜອງການຝຶກອົບຮົມກັບທີ່ກໍ່ເປັນສິ່ງໜຶ່ງທີ່ສຳຄັນຫຼາຍ. ແຜນງານສະໜັບ ສະໜຸນທີ່ເປັນເປົ້າໝາຍສຳລັບກຸ່ມນີ້ ຄວນຊ່ວຍສ້າງຄວາມອາດສາມາດທາງດ້ານການເຮັດທຸລະກິດໃຫ້ແກ່ພະນັກງານລາວທີ່ຢູ່ໃນຕຳ ແໜ່ງຫົວໜ້ານຳ ເພື່ອສ້າງໃຫ້ວິສາຫະກິດຂະໜາດຈຸລະພາກ, ນ້ອຍ ແລະ ກາງ ຂອງ ສປປ ລາວ ໄດ້ຮັບໂອກາດໃໝ່ໆ. ແຕ່ຢ່າງໃດກໍ່ຕາມ, ການປັບປຸງລະບຽບການຂອງລັດໃຫ້ມີຄວາມເຊື່ອຖືໄດ້ ໂດຍການເຜີຍແຜ່ກົດໝາຍ, ລະບຽບການ, ຂັ້ນຕອນທາງດ້ານລະບຽບການ, ຮູບແບບ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງຕ່າງໆ ໃຫ້ຄົນໃນສັງຄົມສາມາດເຂົ້າເຖິງໄດ້ງ່າຍ ເປັນພື້ນຖານອັນທຳອິດທີ່ຕ້ອງໄດ້ເອົາໃຈໃສ່ ເພື່ອ ປັບປຸງວຽກງານການສ້າງວຽກເຮັດງານທຳທີ່ມີຄຸນນະພາບ.

18. ກຸ່ມ 4: ພົບວິກິດທາງດ້ານສຸຂະພາບ. ບັນດານະໂຍບາຍແກ້ໄຂຂໍ້ຈຳກັດທີ່ກຸ່ມນີ້ພົບພໍເປັນນະໂຍບາຍທີ່ກວມເອົາທຸກກຸ່ມໃນທົ່ວປະເທດ, ແນໃສ່ປົກປ້ອງຄົວເຮືອນທີ່ຢູ່ໃນກຸ່ມນີ້ຈາກຜົນກະທົບທາງດ້ານສຸຂະພາບທີ່ເກີດຂຶ້ນກະທັນຫັນ—ໂດຍສະເພາະໃນຂະແໜງທີ່ບໍ່ເປັນທາງການທັງທີ່ຢູ່ໃນເຂດຊົນນະບົດ ແລະ ຕົວເມືອງ. ສະນັ້ນ ການສ້າງລະບົບປະກັນສັງຄົມ ໂດຍສະເພາະແມ່ນລະບົບປະກັນສຸຂະພາບໃຫ້ພຽງພໍ ຄວນຈັດໃຫ້ເປັນບູລິມະສິດອັນໜຶ່ງ ເພື່ອຄຸ້ມຄອງຜູ້ທີ່ຢູ່ໃນເຂດຊົນນະບົດ ແລະ ຜູ້ທີ່ເຮັດວຽກຢູ່ໃນຂະແໜງທີ່ບໍ່ເປັນທາງການ. ໃນການເພີ່ມອັດຕາສ່ວນຂອງປະຊາກອນທີ່ໄດ້ຮັບການຄຸ້ມຄອງທາງດ້ານການເງິນເພື່ອຫຼຸດຜ່ອນການໃຊ້ຈ່າຍໃນການປິ່ນປົວພະຍາດ ອາດຈະປະຕິບັດໄດ້ໂດຍການສະໜັບສະໜຸນຈາກກອງທຶນຮ່ວມທາງດ້ານສຸຂະພາບສຳລັບຜູ້ທີ່ທຸກຍາກ (Health Equity Funds - HEFs), ການຊ່ວຍເຫຼືອຈາກແຜນງານຕ່າງໆ ແລະ ການການປະຕິບັດເງື່ອນໄຂທາງດ້ານປະກັນສັງຄົມພາກເອກະຊົນໃຫ້ມີປະສິດທິພາບຂຶ້ນກວ່າເກົ່າ ເພື່ອການບັນລຸຈຸດປະສົງຂອງລັດຖະບານໃນການຈັດຕັ້ງປະຕິບັດແຜນການບໍລິການທາງດ້ານສາທາລະນະສຸກສຳລັບທຸກຄົນ (Universal Health Coverage-UHC). ແຕ່ຢ່າງໃດກໍ່ຕາມ, ສປປ ລາວ ຈະຕ້ອງສ້າງກົນໄກທີ່ມີຄວາມເຂັ້ມແຂງເພື່ອລະບຸຜູ້ທີ່ທຸກຍາກ ແລະ ປັບປຸງກົນໄກການສະໜອງບໍລິການຂອງລັດ ເພື່ອການໃຫ້ການຊ່ວຍເຫຼືອຢ່າງມີຈຸດສຸມ ແລະ ເປັນປະໂຫຍດຕໍ່ຜູ້ທີ່ທຸກຍາກ.

19. ບາງນະໂຍບາຍກໍ່ເປັນປະໂຫຍດສຳລັບປະຊາກອນຢ່າງກວ້າງຂວາງ, ເຖິງວ່າຈະເປັນນະໂຍບາຍສຳລັບແກ້ໄຂຂໍ້ຈຳກັດສະເພາະສຳລັບກຸ່ມຄົນໃດໜຶ່ງກໍ່ຕາມ. ຕົວຢ່າງ: ນະໂຍບາຍທີ່ກ່ຽວຂ້ອງກັບການເພີ່ມປະສິດທິພາບໃນການຜະລິດກະສິກຳ ໂດຍການຄົ້ນຄວ້າ ແລະ ນຳໃຊ້ແມ່ພັນ ແລະ ສິ່ງທີ່ປະກອບເຂົ້າໃນການຜະລິດທີ່ດີກວ່າເກົ່າ. ນະໂຍບາຍເຫຼົ່ານີ້ຈະເປັນປະໂຫຍດໃຫ້ແກ່ຄົວເຮືອນທີ່ເຮັດກະສິກຳຢູ່ໃນເຂດຫ່າງໄກສອກຫຼີກ, ເຂດພູສູງ (ກຸ່ມ 1) ແລະ ຄົວເຮືອນທີ່ຢູ່ໃນເຂດທົ່ງພຽງທີ່ຢູ່ຫ່າງໄກທີ່ບໍ່ໄກຫຼາຍ (ກຸ່ມ 2). ເຊັ່ນກັນກັບການໃຊ້ນະໂຍບາຍປັບປຸງແວດລ້ອມທຸລະກິດທີ່ຈະຊຸກຍູ້ການສ້າງອາຊີບທີ່ດີກວ່າເກົ່າ ເຊິ່ງເປັນປະໂຫຍດສຳລັບປະຊາກອນໃນຂອບເຂດທີ່ກວ້າງຂວາງກວ່າເກົ່າ. ເວົ້າລວມເຫັນວ່າ ໃນການແກ້ໄຂຂໍ້ຈຳກັດຕ່າງໆສຳລັບແຕ່ລະກຸ່ມ ຈະຕ້ອງໄດ້ມີນະໂຍບາຍແກ້ໄຂໃນຫ້າດ້ານດ້ວຍກັນຄື: (i) ດ້ານກະສິກຳ; (ii) ການສຶກສາ; (iii) ການຝຶກອົບຮົມສີມືແຮງງານ; (iv) ການຍົກລະດັບຄຸນນະພາບຂອງອາຊີບ; ແລະ (v) ການປ້ອງກັນສັງຄົມ ໂດຍສະເພາະແມ່ນການປະກັນສຸຂະພາບ.

Ansoms, An and McKay, Andrew. 2010. "A quantitative analysis of poverty and livelihood profiles: The case of rural Rwanda." Food Policy 35(6): 584-598.

Coulombe, Harold; Epprecht, Michael; Pimhidzai, Obert; Sisoulath, Vilaysouk. 2016. Where Are the Poor? Lao PDR 2015 Census-based Poverty Map: Province- and District-level Results. Washington, DC: World Bank Group.

World Bank. 2014. What does recent evidence tell us about poverty in Lao PDR? Lao PDR Poverty Policy Brief.

World Bank. 2015. Drivers of Poverty Reduction in Lao PDR. Lao PDR Poverty Policy Note. October 2015.

WORLD BANK GROUP

ຫ້ອງການ ທະນາຄານໂລກ ປະຈຳ ສປປ ລາວ, ພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ
ບ້ານ ຊຽງຍືນ, ຖະໜົນ ເຈົ້າຟ້າງຸ່ມ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ

The World Bank Group Lao PDR Country Office, East Asia and Pacific Region
Xieng Ngeun Village, Chao Fa Ngum Road, Chantabouly District, Vientiane, Lao PDR

worldbank.org/lao